**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

********

**ກະຊວງໂຍທາທິການ ແລະ ຂົນສົ່ງ**

# ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ(SEP) ລວມທັງກອບການມີສ່ວນຮ່ວມຂອງຊົນເຜົ່າ (EGEP)

**ສຳລັບໂຄງການປັບປຸງເສັ້ນທາງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ເພື່ອການເຊື່ອມໂຍງເຊື່ອມຈອດ ແຫ່ງ ສປປ ລາວ (**CRRCIP)

**ກະກຽມໂດຍ:**

**ກົມຂົວທາງ (**DOR), **ແລະ**

**ສະຖາບັນໂຍທາທິການ ແລະ ຂົນສົ່ງ (**PTI)

**ສະບັບປັບປຸງ ວັນທີ 13 ພຶດສະພາ 2024**

# Table of Contents

LIST OF ACRONYMS ................ **Error! Bookmark not defined.**

1. Introduction ................ 5

2 Objectives ................ 5

3. Stakeholder Identification and Analysis ................ 6

3.1 Methodology ................ 6

3.2 Affected parties and other interested parties ................ 6

3.3 Ethnic Groups as project' s potential beneficiaries ................ 7

3.3.1 Overview of ethnic groups in the country ................ 7

3.3.2 Ethnic groups in project provinces ................ 7

3.4. Disadvantaged/vulnerable individuals or groups ................ 8

4. Stakeholder Engagement Program ................ 9

4.1 Summary of stakeholder engagement done during project preparation ................ 9

4.2. Summary of project stakeholder needs and methods, tools, and techniques for stakeholder engagement ................ 10

4.3. Stakeholder engagement plan ................ 11

4.4. Reporting back to stakeholders ................ 13

5. Resources and Responsibilities ................ 13

5.1 Resources ................ 13

5.2. Management functions and responsibilities ................ 14

6. Grievance Mechanism ................ 15

6.1 Description of GM ................ 15

7. Monitoring and Reporting ................ 18

7.1 Summary of how SEP implementation will be monitored and reported . **Error! Bookmark not defined.**

7.2 Reporting back to stakeholder groups ................ **Error! Bookmark not defined.**

Annex 1 – Records of Meetings and Consultations ................ **Error! Bookmark not defined.**

Annex 2 – Grievance Submission Form ................ **Error! Bookmark not defined.**

Annex 3 – Consultation Photos ................ **Error! Bookmark not defined.**

# List of Table

Table 1: Ethnic Groups in villages in the Project Area ................**Error! Bookmark not defined.**
Table 2: Summary of needs and methods for stakeholder engagement ... **Error! Bookmark not defined.**
Table 3 : Contact information of key environmental and social in charged persons .......**Error! Bookmark not defined.**
Table 4: Budget for SEP implementation ...................................**Error! Bookmark not defined.**
Table 5: Staff and Responsibilities for SEP Activities..................**Error! Bookmark not defined.**
Table 6: GRM Steps ...............................................................**Error! Bookmark not defined.**

# ຄຳຫຍໍ້ ແລະ ຄວາມໝາຍຂອງຄຳຫຍໍ້

| | | |
|---|---|---|
| AH | Affected Households | ຄົວເຮືອນທີ່ໄດ້ຮັບຜົນກະທົບ |
| CRRCIP | Climate Resilient Road Connectivity Improvement Project | ໂຄງການປັບປຸງເສັ້ນທາງທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ເພື່ອການເຊື່ອມໂຍງເຊື່ອມຈອດ |
| DOR | Department of Road | ກົມຂົວທາງ |
| DONRE | District Natural Resources and Environment Office | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| DPWT | Department of Public Works and Transport | ພະແນກໂຍທາທິການ ແລະ ຂົນສົ່ງ |
| ECC | Environmental Compliance Certificate | ໃບຢັ້ງຢືນສິ່ງແວດລ້ອມ |
| EDPD | Environmental Research and Disaster Prevention Division | ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ |
| ESCP | Environmental and Social Commitment Plan | ແຜນພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESF | Environmental and Social Framework | ກອບດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESIA | Environment and Social Impact Assessment | ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESMF | Environment and Social Management Framework | ກອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESMP | Environment and Social Management Plan | ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ |
| ESS | Environmental and Social Standards | ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ |
| FGD | Focused Group Discussion | ການແບ່ງກຸ່ມສົນທະນາສະເພາະ |
| GBV | Gender Based Violence | ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ |
| GM | Grievance Mechanism | ກົນໄກຮ້ອງທຸກ |
| GOL | Government of Lao PDR | ລັດຖະບານແຫ່ງ ສປປ ລາວ |
| GRM | Grievance Redress Mechanism | ກົນໄກແກ້ໄຂຄຳຮ້ອງທຸກ |
| IEE | Initial Environmental Examination | ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ |
| IP | Indigenous People | ຊົນເຜົ່າພື້ນເມືອງ |
| ISWS | Implementation Support and Work Supervision Consultant | ທີ່ປຶກສາ ສະໜັບສະໜູນ ແລະ ຊີ້ນຳການກໍ່ສ້າງ |
| Lao PDR | Lao People' s Democratic Republic | ສປປ ລາວ |
| LGBT | Lesbian, Gay, Bisexual and Transgender | ຮັກຮ່ວມເພດ (ຍິງ), ຮັກຮ່ວມເພດ (ຊາຍ), ກະເທີຍ ແລະ ຜູ້ປ່ຽນເພດ |
| LMP | Labour Management Procedures | ຂັ້ນຕອນການຄຸ້ມຄອງແຮງງານ |
| MPWT | Ministry of Public Works and Transport | ກະຊວງໂຍທາທິການ ແລະ ຂົນສົ່ງ |
| NCAW | National Commission for the Advancement of Women | ຄະນະກຳມະການແຫ່ງຊາດສິ່ງເສີມຄວາມກ້າວໜ້າຂອງແມ່ຍິງ |
| NGO | Non Government Organization | ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ |
| OHS | Occupational Health and Safety | ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ |
| OPBC | Output and Performance-Based Contracts | ສັນຍາທີ່ອີງຕາມ ການປະຕິບັດ ແລະ ຜົນສຳເລັດຂອງວຽກ |
| OPRC | Output and Performance-based Road Contracts | ສັນຍາກໍ່ສ້າງທາງທີ່ອີງຕາມ ການປະຕິບັດ ແລະ ຜົນສຳເລັດຂອງວຽກ |
| PAH | Project Affected Households | ຄົວເຮືອນທີ່ໄດ້ຮັບຜົນກະທົບຈາກໂຄງການ |
| PAP | Project affected people | ຄົນທີ່ໄດ້ຮັບຜົນກະທົບ |
| PAVs | Project Affected Villages | ບ້ານທີ່ໄດ້ຮັບຜົນກະທົບ |
| PAFO | Provincial Agriculture and Forestry Offices | ພະແນກກະສິກຳ ແລະ ປ່າໄມ້ແຂວງ |

| | | |
|---|---|---|
| PD | Project Director | ຫົວໜ້າໂຄງການ |
| PDO | Project Development Objective | ຈຸດປະສົງການພັດທະນາໂຄງການ |
| PIU | Project Implementation Unit | ຄະນະຈັດຕັ້ງປະຕິບັດໂຄງການ |
| PLSW | Provincial Labor and Social Welfare | ແຮງງານສະຫວັດດີການສັງຄົມແຂວງ |
| PMU | Project Management Unit | ຄະນະຄຸ້ມຄອງໂຄງການ |
| PM | Project Management Unit | ຫົວໜ້າໂຄງການ |
| PONRE | Provincial Offices of Natural Resource and Environment | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ |
| PTI | Public Works and Transport Institute | ສະຖາບັນໂຍທາທິການ ແລະ ຂົນສົ່ງ |
| PWD | People with Disability | ຄົນພິການ |
| RC | Resettlement Committee | ຄະນະກຳມະການຈັດສັນຍົກຍ້າຍ |
| SEA/SH | Sexual Exploitation and Abuse and Sexual Harassment | ການໃຊ້ຄວາມຮຸນແຮງທາງເພດ ແລະ ການລ່ວງລະເມີດແລະຖຸກຄາມທາງເພດ |
| SEP | Stakeholder Engagement Plan | ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ |
| VAC | Violence Against Children | ຄວາມຮຸນແຮງຕໍ່ເດັກນ້ອຍ |
| WB | The World Bank | ທະນາຄານໂລກ |

# 1. ພາກສະເໜີ

1. ຈຸດປະສົງຂອງໂຄງການດັ່ງກ່າວແມ່ນແນໃສ່ເພື່ອປັບປຸງເສັ້ນທາງມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ຢູ່ແຂວງເປົ້າໝາຍ, ເສີມຂະຫຍາຍຄວາມສາມາດໃນການຄຸ້ມຄອງຕາໜ່າງເສັ້ນທາງ ແລະ ໃນກໍລະນີເກີດວິກິດການ ຫຼື ເຫດການສຸກເສີນ ກໍ່ສາມາດຕອບໂຕ້ໄດ້ທັນການ ແລະ ມີປະສິດທິຜົນ. ໂຄງການປະກອບດ້ວຍສາມອົງປະກອບ, ດັ່ງລາຍລະອຽດຕໍ່ໄປນີ້:

   - **ອົງປະກອບທີ 1: ເສັ້ນທາງທີ່ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ** (ທັງໝົດ: 51 ລ້ານໂດລາສະຫະລັດ; IDA: 50 ລ້ານໂດລາສະຫະລັດ, ລັດຖະບານ ສປປ ລາວ: 1 ລ້ານໂດລາສະຫະລັດ): ໂຄງການດັ່ງກ່າວຈະສະໜັບສະໜູນການປັບປຸງທາງຫຼວງເມືອງ ແລະ ທາງຊົນນະບົດ ປະມານ 300 ກິໂລແມັດ ໃຫ້ໄດ້ມາດຕະຖານ ຂອງທາງຊັ້ນ V/VI ຕາມຄູ່ມືການອອກແບບທາງ ຂອງ ກະຊວງ ຍທຂ (MPWT) ແລະ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ. ການຈັດຫາທີ່ດິນ, ການຈັດສັນພູມລໍາເນົາ ແລະ ການຟື້ນຟູ ແມ່ນຈະໄດ້ຮັບການສະໜັບສະໜູນຈາກລັດຖະບານ ແຫ່ງ ສປປ ລາວ.
   - **ອົງປະກອບທີ 2: ການພັດທະນາອົງການຈັດຕັ້ງ** - ສະໜັບສະໜູນ ກະຊວງ ຍທຂ ໃນການສ້າງຂີດຄວາມສາມາດ ໃຫ້ແກ່ ຜູ້ຮັບເໝົາໃນທ້ອງຖິ່ນ, ສ້າງຄວາມເຂັ້ມແຂງໃຫ້ແກ່ MPWT ແລະ DPWTs, ກະກຽມແຜນຈັດຕັ້ງປະຕິບັດດ້ານບົດບາດຍິງ-ຊາຍ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານຂອງ MPWT ແລະ DPWTs ກ່ຽວກັບບັນຫາທີ່ກ່ຽວຂ້ອງ ໄດ້ແກ່ຄວາມປອດໄພຕາມທ້ອງຖະໜົນ, ບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມສ່ຽງຈາກໄພພິບັດຈາກການປ່ຽນແປງດິນດິນຟ້າອາກາດ.
   - **ອົງປະກອບທີ 3: ອົງປະກອບການຕອບໂຕ້ເຫດການສຸກເສີນທີ່ອາດຈະເກີດຂຶ້ນ:** ອົງປະກອບນີ້ຈະຊ່ວຍ ກະຊວງ ຍທຂ ໃນກໍລະນີ ເກີດວິກິດການທີ່ຄາດບໍ່ເຖິງ ຫຼື ເຫດການສຸກເສີນ.

2. ໂຄງການນີ້ໄດ້ກໍາລັງກະກຽມພາຍໃຕ້ຂອບວຽກງານສິ່ງແວດລ້ອມ ແລະ ສັງຄົມ (ESF). ຕາມມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ ESS10 ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ເຜີຍແຜ່ຂໍ້ມູນຂ່າວສານ, ພາກສ່ວນທີ່ຈັດຕັ້ງປະຕິບັດຄວນສະໜອງຂໍ້ມູນຂ່າວສານໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃຫ້ທັນເວລາ, ເປັນຂໍ້ມູນທີ່ ຖືກຕ້ອງ, ເຂົ້າໃຈໄດ້ ແລະ ສາມາດເຂົ້າເຖິງໄດ້ ແລະ ມີການປຶກສາຫາລືກັບເຂົາເຈົ້າໃນລັກສະນະທີ່ເໝາະສົມທາງດ້ານວັດທະນະທໍາ, ເຊິ່ງປາສະຈາກການບິດເບືອນຄວາມຈິງ, ການແຊກແຊງ, ການບີບບັງຄັບ, ການຈໍາແນກ ຫຼື ການຂົ່ມຂູ່.

3. ຄວນອ່ານ SEP ນີ້ຮ່ວມກັບແຜນການອື່ນໆ ທີ່ໄດ້ກຽມສໍາລັບໂຄງການ ລວມທັງກອບການຄຸ້ມຄອງສິ່ງແວດລ້ອມແລະສັງຄົມ (ESMF), ກອບນະໂຍບາຍການຈັດສັນຍົກຍ້າຍ (RPF) ແລະ ແຜນພັນທະສັນຍາສິ່ງແວດລ້ອມ ແລະ ສັງຄົມ (ESCP).

# 2 ຈຸດປະສົງ

4. ຈຸດປະສົງລວມຂອງ SEP ແມ່ນເພື່ອກໍານົດແຜນງານສໍາລັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ລວມທັງການເຜີຍແຜ່ຂໍ້ມູນສູ່ສາທາລະນະ ແລະ ການປຶກສາຫາລືໃນທຸກຂັ້ນຕອນໃນວົງຈອນໂຄງການ. SEP ໃຫ້ລາຍລະອຽດວິທີການສໍາລັບທີມງານໂຄງການ ທີ່ຈະຕິດຕໍ່ສື່ສານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ລວມທັງກົນໄກທີ່ປະຊາຊົນສາມາດແຈ້ງຄວາມກັງວົນ, ໃຫ້ຄໍາຄິດເຫັນ ຫຼື ຮ້ອງທຸກກ່ຽວກັບກິດຈະກໍາຂອງໂຄງການ ຫຼື ກິດຈະກໍາທີ່ກ່ຽວຂ້ອງກັບໂຄງການ.

5. ກົດໝາຍແຫ່ງຊາດ, ດໍາລັດ, ລະບຽບການ ແລະ ບົດແນະນໍາ ທີ່ສໍາຄັນ ຂອງ ສປປ ລາວ ເຊັ່ນ: ດໍາລັດ EIA ປີ 2022, ຄໍາແນະນໍາການມີສ່ວນຮ່ວມຂອງປະຊາຊົນ ປີ 2011, ດໍາລັດວ່າດ້ວຍກຸ່ມຊົນເຜົ່າ ປີ 2020 ແລະ ບົດແນະນໍາການປຶກສາຫາລືກ່ຽວກັບກຸ່ມຊົນເຜົ່າ ໄດ້ຖືກພິຈາລະນາໃນລະຫວ່າງການກະກຽມເຄື່ອງມື ESF ແລະ ເອກະສານເຫຼົ່ານີ້ຈະຖືກນໍາໃຊ້ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ.

# 3. ການປະເມີນ ແລະ ການກຳນົດພາກສ່ວນທີ່ກ່ຽວຂ້ອງ

## 3.1 ວິທີການ

6. ເພື່ອໃຫ້ເປັນໄປຕາມວິທີການຈັດຕັ້ງປະຕິບັດທີ່ດີທີ່ສຸດ ໂຄງການຈະນຳໃຊ້ຫຼັກການສຳລັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ດັ່ງຕໍ່ໄປນີ້:

- ວິທີການແບບເປີດກ້ວາງ ແລະ ເປັນຮອບວຽນຕໍ່ເນື່ອງ: ການໃຫ້ຄຳປຶກສາກັບປະຊາຊົນສຳລັບໂຄງການ ຈະຖືກຈັດຂຶ້ນໃນທຸກຂັ້ນຕອນຂອງວົງຈອນໂຄງການ, ດຳເນີນຢ່າງເປີດກ້ວາງ, ບໍ່ມີການບິດເບືອນຈາກພາຍນອກ, ການແຊກແຊງ, ການບີບບັງຄັບ ຫຼື ການຂົ່ມຂູ່.
- ແຈ້ງການມີສ່ວນຮ່ວມ ແລະ ໃຫ້ຄຳຄິດເຫັນ: ຂໍ້ມູນຈະຖືກກະກຽມ ແລະ ແຈກຢາຍຢ່າງກວ້າງຂວາງໃນບັນດາພາກສ່ວນທີ່ກ່ຽວຂ້ອງທັງໝົດໃນຮູບແບບທີ່ເໝາະສົມ; ເປີດໂອກາດສຳລັບການສະເໜີຄຳຄິດເຫັນຂອງພາກສ່ວນກ່ຽວຂ້ອງ ແລະ ສຳລັບການວິເຄາະ ແລະ ການແກ້ໄຂຄຳຄິດເຫັນ ແລະ ຄວາມກັງວົນ.

- ການຄຸ້ມຄອງ ແລະ ຄວາມລະອຽດອ່ອນ: ການກຳນົດຜູ້ທີ່ມີສ່ວນຮ່ວມແມ່ນດຳເນີນເພື່ອສະໜັບສະໜູນການສື່ສານທີ່ດີຂຶ້ນ ແລະ ສ້າງຄວາມສຳພັນທີ່ມີປະສິດທິພາບ. ຂະບວນການມີສ່ວນຮ່ວມສຳລັບໂຄງການແມ່ນໄດ້ຊຸກຍູ້ໃຫ້ ທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີສ່ວນຮ່ວມໃນຂະບວນການປຶກສາຫາລື. ພາກສ່ວນທີ່ກ່ຽວຂ້ອງສາມາດເຂົ້າເຖິງແຫຼ່ງຂໍ້ມູນໄດ້ຢ່າງເທົ່າທຽມກັນ. ຄວາມອ່ອນໄຫວຕໍ່ກັບຄວາມຕ້ອງການຂອງພາກສ່ວນທີ່ກ່ຽວຂ້ອງແມ່ນຫຼັກການພື້ນຖານຂອງການເລືອກວິທີການມີສ່ວນຮ່ວມ. ເອົາໃຈໃສ່ເປັນພິເສດຕໍ່ກຸ່ມຄົນອ່ອນແອທີ່ອາດຈະມີຄວາມສ່ຽງຈະຖືກຕັດອອກຈາກຜົນປະໂຫຍດຂອງໂຄງການ ໂດຍສະເພາະແມ່ຍິງ, ຜູ້ສູງອາຍຸ, ຄົນພິການ, ຜູ້ຖືກຍົກຍ້າຍ ແລະ ການເຄື່ອນຍ້າຍ ແຮງງານ ແລະ ຊຸມຊົນ ແລະ ຄວາມອ່ອນໄຫວທາງດ້ານວັດທະນະທຳທີ່ຫຼາກຫຼາຍຂອງປະຊາຊົນບັນດາເຜົ່າ.
- ຄວາມຍືດຢຸ່ນ: ການເວັ້ນໄລຍະຫ່າງທາງສັງຄົມ (ມີຄວາມຈຳເປັນໃນກໍລະນີຂອງການລະບາດຂອງ COVID-19 ຫຼືພະຍາດຕິດຕໍ່ອື່ນໆເກີດຂຶ້ນ), ສະພາບການທາງວັດທະນະທຳ (ຕົວຢ່າງ: ນະໂຍບາຍດ້ານບົດບາດຍິງ-ຊາຍ) ຫຼື ປັດໃຈດ້ານການປົກຄອງ (ຕົວຢ່າງ: ຄວາມສ່ຽງສູງທີ່ຈະຖືກຕໍ່ຕ້ານ) ການຂັດຂວາງຮູບແບບປະເພນີພື້ນເມືອງ ກ່ຽວກັບການມີສ່ວນຮ່ວມແບບໜ້າຕໍ່ໜ້າ, ຄວນປັບປຸງວິທີການມີສ່ວນຮ່ວມເປັນຫຼາຍຮູບແບບ ລວມທັງຮູບແບບຕ່າງໆທາງອິນເຕີເນັດ ຫຼື ການສື່ສານໂທລະສັບ.

## 3.2 ພາກສ່ວນທີ່ໄດ້ຮັບຜົນກະທົບ ແລະ ພາກສ່ວນອື່ນໆທີ່ມີຄວາມສົນໃຈ

7. ພາກສ່ວນທີ່ໄດ້ຮັບຜົນກະທົບລວມມີຊຸມຊົນໃນທ້ອງຖິ່ນ, ສະມາຊິກຂອງຊຸມຊົນ ແລະ ພາກສ່ວນອື່ນໆທີ່ອາດຈະໄດ້ຮັບຜົນກະທົບໂດຍກົງຈາກໂຄງການ ໂດຍສະເພາະ ບຸກຄົນ ແລະ ກຸ່ມຄົນ ທີ່ນອນໃນໝວດນີ້:

8. **ພາກສ່ວນທີ່ໄດ້ຮັບຜົນກະທົບ.** ພາກສ່ວນທີ່ໄດ້ຮັບຜົນກະທົບ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຈາກໂຄງການລວມມີກຸ່ມເປົ້າໝາຍຂອງໂຄງການ, ສະມາຊິກຊຸມຊົນ ແລະ ພາກສ່ວນອື່ນໆທີ່ອາດຈະໄດ້ຮັບຜົນປະໂຫຍດຈາກໂຄງການ (ທັງທາງກົງ ຫຼື ທາງອ້ອມ). ກຸ່ມເປົ້າໝາຍຂອງໂຄງການແມ່ນປະຊາຊົນລວມທັງຍິງ ແລະ ຊາຍ ໃນທຸກເພດທຸກໄວ ແລະ ທຸກສະພາບເສດຖະກິດ-ສັງຄົມ (ທຸກຍາກ ແລະ ຮັ່ງມີ) ລວມທັງຄົນພິການ, LGBT, ຜູ້ເຖົ້າ, ເດັກນ້ອຍ/ນັກຮຽນໃນໂຮງຮຽນ ແລະ ຊົນເຜົ່າ (Ips) ທີ່ອາໃສຢູ່ລຽບຕາມເສັ້ນທາງທີ່ສະເໜີ ຂອງ 3 ແຂວງ.

9. **ພາກສ່ວນອື່ນໆທີ່ສົນໃຈ.** ພາກສ່ວນເຫຼົ່ານີ້ອາດຈະປະກອບມີພະນັກງານຂອງລັດ, ຜູ້ນຳຊຸມຊົນ ແລະ ອົງການຈັດຕັ້ງທາງສັງຄົມ ລວມທັງຜູ້ທີ່ເຮັດວຽກຢູ່ໃນ ຫຼື ຢູ່ກັບຊຸມຊົນດຽວກັນ ພາຍໃຕ້ໂຄງການ ເຊິ່ງອາດລວມມີລະດັບການບໍລິຫານໃນຂັ້ນຕ່າງໆ ລວມທັງຂັ້ນບ້ານ, ເມືອງ, ແຂວງ ແລະ ຂັ້ນສູນກາງ ລວມທັງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ສະຫະພັນແມ່ຍິງລາວ ຮັບຜິດຊອບວຽກງານສົ່ງເສີມ ແລະ ປົກປ້ອງ ສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ, ແນວລາວສ້າງຊາດ ຮັບຜິດຊອບໃນການສົ່ງເສີມ ແລະ ສະໜັບສະໜູນ ກຸ່ມຊົນເຜົ່າ, ຜູ້ນຳກຸ່ມຊົນເຜົ່າ, ອຳນາດການປົກຄອງບ້ານ ແລະ ອົງການ NGOs.

## 3.3 ກຸ່ມຊົນເຜົ່າທີ່ມີແນວໂນ້ມທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ

### *3.3.1 ສະພາບລວມຂອງກຸ່ມຊົນເຜົ່າໃນປະເທດ*

10. ປະເທດລາວລວມມີ 50 ຊົນເຜົ່າ, ແບ່ງອອກເປັນ 4 ຊົນເຜົ່າຕາມກຸ່ມພາສາ ເຊັ່ນ: (i) ລາວໄຕ, ເຊິ່ງກວມເອົາ 65% ຂອງປະຊາກອນທັງໝົດ (7.2 ລ້ານຄົນ), (ii) ມອນ-ຂະແມ, (iii) ມົ້ງອຽນມຽນ ແລະ (iv) ຈີນ-ຕິເບດ. ຊົນເຜົ່າທີ່ຢູ່ພາຍໃຕ້ສາມກຸ່ມສຸດທ້າຍແມ່ນຖືວ່າເປັນຊົນເຜົ່າພື້ນເມືອງ (IP) ມີສີ່ລັກສະນະພາຍໃຕ້ ESS7. ຊົນເຜົ່າ (IP) ທີ່ມີຢູ່ໃນເຂດໂຄງການລວມມີ: ມອນ-ຂະແມ (ຂະມຸ, ເຢຣູ, ບຣູ, ຊວາຍ, ຕາ-ອອຍ ແລະ ກະຕັງ). ເບິ່ງຕາຕະລາງ 1 ຂ້າງລຸ່ມນີ້ສໍາລັບລາຍລະອຽດເພີ່ມເຕີມຂອງ EG ທີ່ຢູ່ໃນໂຄງການຍ່ອຍ.

### *3.3.2 ກຸ່ມຊົນເຜົ່າໃນແຂວງຂອງໂຄງການ*

11. ມີກຸ່ມຊົນເຜົ່າຕ່າງໆຢູ່ໃນແຂວງຂອງໂຄງການ (ຕາມຕາຕະລາງ 1 ຂ້າງລຸ່ມນີ້) ຊົນເຜົ່າຫຼັກທີ່ລວມເຂົ້າເປັນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການໃນປະຈຸບັນ ແລະ ພາກສ່ວນທີ່ໄດ້ຮັບຜົນກະທົບລວມມີ 2 ກຸ່ມໃຫຍ່ຄື: ລາວ (ລາວໄຕ), ແລະ ມອນ-ຂະແມ (ມາກົງ, ຂະມຸ, ພູໄທ, ຢະຣູ, ບຣູ, ຕາໂອຍ, ກະຕັງ) (ລາຍລະອຽດກເບິ່ງໃນຕາຕະລາງ. 1).

ຕາຕະລາງ 1: ກຸ່ມຊົນເຜົ່າຢູ່ບ້ານໃນພື້ນທີ່ຂອງໂຄງການ

| ແຂວງ/ທາງ # | ລວມລວງຍາວ (Km) | ຈໍານວນ ເສັ້ນທາງ | ຈໍານວນ ຄອບຄົວ[1] | ກຸມຊົນເຜົ່າຢູ່ບ້ານເຫຼົ່ານັ້ນ |
|---|---|---|---|---|
| **ແຂວງຄໍາມ່ວນ (KM)** | **86.56** | **21** | **1,592** | |
| 1. ທາງເລກທີ #5682 ເມືອງເຊບັ້ງໄຟ | 17.56 | 7 | 518 | Makong (IP). |
| 2. ທາງເລກທີ 5683 ເມືອງເຊບັ້ງໄຟ | 49 | 8 | 620 | Khmu and Phoutai (IP) |
| 3. ທາງເລກທີ 5669 ເມືອງບົວລະພາ | 20 | 6 | 454 | Phouthai, Khmu, and Yrou (IP) |
| ແຂວງ ສະຫວັນນະເຂດ **Savannakhet (SVN)** | **123.9** | **44** | **7,680** | |
| 1. ທາງເລກທີ DR 6576 ເມືອງຈໍາພອນ | 8.6 | 7 | 940 | Lao Tai (none IP) |
| 2. ທາງເລກທີ 6586 ເມືອງຈໍາພອນ | 8.3 | 12 | 2,386 | Lao Tai (none IP) |
| 3. ທາງເລກທີ DR 6323 ເມືອງຈໍາພອນ | 14 | 4 | 1,026 | Lao Tai (none IP) |
| 4. ທາງເລກທີ DR 6507 ເມືອງສອງຄອນ | 43 | 7 | 1,295 | Brou (IP) and Lao Tai (none IP) |
| 5. ທາງເລກທີ RR 6594 ເມືອງສອງຄອນ | 20 | 8 | 1,521 | Lao (none IP) |
| 6. ທາງເລກທີ 6861 ເມືອງເຊໂປນ | 30 | 6 | 512 | Brou (IP) |
| ແຂວງ ສາລະວັນ **Saravan (SLV)** | **83.5** | **43** | **5,272** | |
| 1. ທາງເລກທີ 6933 ເມືອງສາລະວັນ | 21.88 | 12 | 1,461 | Lao Tai (none IP) and Souay (IP) |
| 2. ທາງເລກທີ 6909 ເມືອງເລົ່າງາມ | 32.41 | 14 | | Lao Tai (none IP), |

[1] Note this is total number of HHs in a village. Details on numbers of ethnic groups HHs in each village is not available at this stage.

| ແຂວງ/ທາງ # | ລວມລວງຍາວ (Km) | ຈຳນວນ ເສັ້ນທາງ | ຈຳນວນ ຄອບຄົວ[1] | ກຸມຊົນເຜົ່າຢູ່ບ້ານເຫຼົ່ານັ້ນ |
|---|---|---|---|---|
| | | | 1,484 | Souay, and Ta-oy (IP) |
| 3. ທາງເລກທີ 6913 ເມືອງເລົ່າງາມ | 16.51 | 10 | 1,729 | Lao Tai (none IP), Souay, Ta-oy, and Yrou (IP) |
| 4. ທາງເລກທີ 7271 ເມືອງຕຸ້ມລານ | 12.70 | 7 | 598 | Katang (IP) |
| ລວມ Grand Total | **293.96** | **108** | **14,544** | |

12. ໃນປະຈຸບັນມີ 2 ຊົນເຜົ່າຕົ້ນຕໍທີ່ເປັນຜູ້ໄດ້ຮັບຜົນປະໂຫຍດເຊັ່ນ: ລາວ (ລາວໄຕ) ແລະ ມອນ-ຂະແມ (ມາກົງ, ຂະມຸ, ພູໄທ, ຢໍ, ບຣູ, ຕາ-ອອຍ, ກະຕັງ). ຄຸນລັກສະນະທົ່ວໄປຂອງກຸ່ມເຫຼົ່ານີ້ມີລາຍລະອຽດລຸ່ມນີ້:

**ລາວ (ລາວ-ໄຕ)**

13. ຊົນເຜົ່າລາວ-ໄຕ: ປະກອບມີປະມານເຄິ່ງໜຶ່ງຂອງປະຊາກອນ ເຊິ່ງຄອບຄອງທາງດ້ານເສດຖະກິດ ແລະ ວັດທະນະທຳ ເປັນສ່ວນໃຫຍ່. ເຖິງຢ່າງໃດກໍ່ຕາມ ຍັງມີບາງແຂວງ ແລະ ເມືອງ ທີ່ຈຳນວນຊົນເຜົ່າພື້ນເມືອງມີຫຼາຍກວ່າກຸ່ມລາວໄຕ ແລະບ່ອນທີ່ວັດທະນະທຳຂອງເຂົາເຈົ້າມີລັກສະນະໂດດເດັ່ນ. ເຜົ່າລາວໄຕ ເປັນຊົນເຜົ່າທີ່ພົ້ນເດັ່ນ, ສ່ວນຫຼາຍແມ່ນລາວລຸ່ມ ແລະ ເຂົາເຈົ້າມັກອາໃສຢູ່ເຂດທົ່ງພຽງ, ຕາມພື້ນທີ່ດິນທາມ ມີອາຊີບເຮັດນາເປັນຫຼັກ.

**ມອນ-ຂະແມ**

14. ມອນ-ຂະແມ ມີຫຼາຍກຸ່ມຊົນເຜົ່າ ແລະ ກຸ່ມຍ່ອຍ ແລະ ພາສາທີ່ພວກເຂົາໃຊ້ແມ່ນບໍ່ເຂົ້າໃຈເຊິ່ງກັນ ແລະ ກັນ ເຖິງວ່າຈະຢູ່ໃນກຸ່ມ/ກຸ່ມຫຼັກດຽວກັນກໍ່ຕາມ. ແຫຼ່ງອາຊີບ ແລະ ລາຍຮັບ ຕົ້ນຕໍຂອງພວກເຂົາແມ່ນອີງໃສ່ ການກະສິກຳ, ການປູກຝັງ ແລະ ລ້ຽງສັດ. ບາງຄັ້ງຄາວພວກເຂົາກໍ່ຈະເກັບເຄື່ອງປ່າຂອງດົງເພື່ອມາຂາຍ, ຜະລິດ ແລະ ຂາຍຖ່ານ ແລະ ເຄື່ອງເຟີນີເຈີທີ່ເຮັດດ້ວຍມື.

15. ແມ່ຍິງ ແລະ ຜູ້ເຖົ້າຂອງຊົນເຜົ່າເຫຼົ່ານີ້ ຈຳນວນຫຼາຍມີຄວາມຫຍຸ້ງຍາກໃນການເວົ້າ ແລະ ເຂົ້າໃຈພາສາລາວ. ແມ່ຍິງອາດຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມໃນກອງປະຊຸມ ຫຼື ເຖິງແມ່ນວ່າຈະໄດ້ຮັບການອະນຸຍາດ ແລະ ຊຸກຍູ້ໃຫ້ເຂົ້າຮ່ວມ ແຕ່ພວກເຂົາກໍ່ຂີ້ອາຍ ແລະ ບໍ່ກ້າເວົ້າ ເນື່ອງຈາກບັນທັດຖານແບບດັ້ງເດີມ. ພວກເຂົາອາດຈະບໍ່ຫວ່າງທີ່ຈະເຂົ້າຮ່ວມໃນກອງປະຊຸມເພາະວ່າພວກເຂົາຕ້ອງເຮັດວຽກຢູ່ໃນພື້ນທີ່ກະສິກຳ ແລະ ເກັບຊື້ຜະລິດຕະພັນຈາກປ່າ. ດັ່ງນັ້ນ, ຄວາມຕ້ອງການ ແລະ ວິທີການເພື່ອປັບປຸງການມີສ່ວນຮ່ວມຂອງເຂົາເຈົ້າໄດ້ຖືກກະກຽມໄວ້ຢູ່ໃນຕາຕະລາງ 2.

## 3.4. ບຸກຄົນ ຫຼື ກຸ່ມຄົນທີ່ບໍ່ໄດ້ຮັບຜົນປະໂຫຍດ/ດ້ອຍໂອກາດ

16. ພາຍໃນໂຄງການ, ກຸ່ມຄົນອ່ອນແອ ຫຼື ດ້ອຍໂອກາດ ອາດຈະລວມເຖິງແຕ່ບໍ່ຈຳກັດສະເພາະ ດັ່ງນີ້: 1) ຄົວເຮືອນທີ່ມີລາຍຮັບຕໍ່າກວ່າເສັ້ນແບ່ງຄວາມທຸກຍາກ 3.20 ໂດລາຕໍ່ມື້, 2) ຜູ້ສູງອາຍຸເປັນຫົວໜ້າຄອບຄົວໂດຍທີ່ບໍ່ມີຜູ້ເບິ່ງແຍງ (3) ແມ່ຍິງທີ່ເປັນຫົວໜ້າຄອບຄົວ, ໂດຍສະເພາະແມ່ນຄອບຄົວທີ່ມີລາຍຮັບຕໍ່າກວ່າເສັ້ນລະດັບຄວາມທຸກຍາກ; (4) ຄົນພິການ; (5) ເດັກນ້ອຍ ແລະ ນັກຮຽນ (ກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມ) ນຳໃຊ້ບັນດາເສັ້ນທາງຂອງໂຄງການ, (5) ຊົນເຜົ່າ ແລະ (6) ຄົນ LGBT ທີ່ອາດຈະປະເຊີນກັບການຖືກດູຖູກທາງດ້ານສັງຄົມ ແລະ ມີຄວາມລຳອຽງ ເຊິ່ງອາດນຳໄປສູ່ການຍົກເວັ້ນ, ໂດດດ່ຽວ ຫຼື ການຂົ່ມເຫັງ. ປະຊາຊົນ/ກຸ່ມເຫຼົ່ານີ້ມີຄວາມດ້ອຍໂອກາດ/ມີຄວາມສ່ຽງ ເນື່ອງຈາກຄວາມສາມາດຂອງເຂົາເຈົ້າຕໍ່າຫຼາຍ ລວມທັງອຸປະສັກທາງວັດທະນະທຳທີ່ກີດກັ້ນການເຂົ້າເຖິງໂຄງການ ແລະ/ຫຼື ຂາດຄວາມເຂົ້າໃຈຂໍ້ມູນກ່ຽວກັບໂຄງການ ແລະ ຜົນກະທົບຫຼາຍເມື່ອທຽບກັບກຸ່ມອື່ນໆ ເນື່ອງຈາກຂໍ້ຈຳກັດທາງດ້ານກາຍະພາກ, ວັດທະນະທຳ-ສັງຄົມ.

17. ກຸ່ມຜູ້ດ້ອຍໂອກາດໃນຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການອາດຈະເພີ່ມຂຶ້ນ ຢືນຢັນຕື່ມອີກ ແລະ ປຶກສາຫາລືໂດຍຜ່ານວິທີການສະເພາະຕາມຄວາມເໝາະສົມ. ລາຍລະອຽດວິທີການສົ່ງເສີມການມີສ່ວນຮ່ວມທີ່ຈະດຳເນີນການໂດຍໂຄງການແມ່ນສະໜອງໃຫ້ຢູ່ໃນພາກຕໍ່ໄປນີ້.

# 4. ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

## 4.1 ສະຫຼຸບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທີ່ໄດ້ເຮັດໃນລະຫວ່າງການກະກຽມໂຄງການ

18. ໃນໄລຍະກະກຽມ SEP ໄດ້ຈັດກອງປະຊຸມປຶກສາຫາລືກັບປະຊາຊົນ ຂັ້ນທ້ອງຖິ່ນ/ຂັ້ນແຂວງ ໃນລະຫວ່າງວັນທີ 3-27 ຕຸລາ 2023, ມີຜູ້ເຂົ້າຮ່ວມທັງໝົດ 669 ຄົນ (ຊາຍ 423 ຄົນ, ຍິງ 246 ຄົນ) ເຊິ່ງຕາງໜ້າໃຫ້ພາກສ່ວນກ່ຽວຂ້ອງຂອງໂຄງການ, ຜູ້ໄດ້ຮັບຜົນກະທົບຈາກໂຄງການ (PAPs) ແລະ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກໂຄງເຂົ້າຮ່ວມ. ການປຶກສາຫາລືເຫຼົ່ານີ້ໄດ້ລວບລວມເອົາຄຳຄິດເຫັນ ເພື່ອສັງລວມເຂົ້າໃນຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ SEP ນີ້.

19. ໄດ້ດຳເນີນການປຶກສາຫາລືໃນ 3 ແຂວງເປົ້າໝາຍຂອງໂຄງການ ຄື ແຂວງຄຳມ່ວນ, ແຂວງສະຫວັນນະເຂດ ແລະ ແຂວງສາລະວັນ. ຜູ້ເຂົ້າຮ່ວມທັງໝົດ 669 ຄົນ ເຊິ່ງເປັນຕົວແທນຂອງຊົນເຜົ່າຕ່າງໆ ເຊັ່ນ: ລາວໄຕ, ຂະມຸ, ມາກົງ, ກະເລີງ, ຈະເລີນ, ພູໄທ, ໄຕ, ກະຕັງ, ຕາໂອຍ ແລະ ປາໂກ. ລາຍລະອຽດສະຫຼຸບໂດຍຫຍໍ້ກັບພາກສ່ວນກ່ຽວຂ້ອງ ແລະ PAPs ແມ່ນສະຫຼຸບຂ້າງລຸ່ມນີ້. ສຳລັບລາຍລະອຽດເພີ່ມເຕີມ ເບິ່ງໃນເອກະສານຊ້ອນທ້າຍ 1 ແລະ ຕາຕະລາງ 1.

### 4.1.1 ການປຶກສາຫາລືກັບອົງການພາກລັດທີ່ກ່ຽວຂ້ອງ

20. ການປຶກສາຫາລືກັບອົງການພາກລັດທີ່ກ່ຽວຂ້ອງ ຢູ່ຂັ້ນແຂວງ ລວມທັງພະແນກໂຍທາທິການ ແລະ ຂົນສົ່ງ (DPWT), ຫ້ອງວ່າການປົກຄອງແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (PONRE), ພະແນກກະສິກຳ ແລະ ປ່າໄມ້, ພະແນກແຮງງານ ແລະ ສະຫວັດດີການສັງຄົມ. (ພສສ), ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ ແລະ ຊາວໜຸ່ມແຂວງ ໄດ້ດຳເນີນຢູ່ 3 ແຂວງ ໃນລະຫວ່າງວັນທີ 03-23 ຕຸລາ 2023, ບັນດາບັນຫາສຳຄັນ ແລະ ຄຳສະເໜີຂອງພາກສ່ວນກ່ຽວຂ້ອງ ສາມາດສັງລວມໄດ້ດັ່ງນີ້:

- ໃນໄລຍະດຳເນີນການກໍ່ສ້າງ ຜູ້ຮັບເໝົາຄວນຫົດນໍ້າທາງຢ່າງເປັນປົກກະຕິ ເພື່ອປ້ອງກັນຂີ້ຝຸ່ນ ແລະ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ຄົນຢູ່ຊຸມຊົນ;
- ເສັ້ນທາງເຂົ້າ-ອອກທີ່ໄດ້ຮັບຄວາມເສຍຫາຍ-ເປ່ເພໃນໄລຍະກໍ່ສ້າງຈະຕ້ອງໄດ້ສ້ອມແປງໂດຍຜູ້ຮັບເໝົາກໍ່ສ້າງຈົນກວ່າຈະສຳເລັດການກໍ່ສ້າງ;
- ຄວນຕິດຕັ້ງປ້າຍເຕືອນ-ປ້າຍຫ້າມ, ປ້າຍຈຳກັດຄວາມໄວ ໃນສະໜາມກໍ່ສ້າງໃຫ້ເໝາະສົມ;
- ອົງການພາກລັດທີ່ກ່ຽວຂ້ອງ ຄວນມີສ່ວນຮ່ວມຕັ້ງແຕ່ເລີ່ມຕົ້ນໂຄງການ ເພື່ອຕິດຕາມວຽກງານກໍ່ສ້າງຢ່າງສະໝໍ່າ-ສະເໝີ ແລະ ເພື່ອຮັບປະກັນວ່າຜູ້ຮັບເໝົາກໍ່ສ້າງປະຕິບັດຕາມມາດຕະການແກ້ໄຂສິ່ງແວດລ້ອມ ແລະ ສັງຄົມ;
- ການສຳຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກແມ່ນຈຳເປັນສຳລັບເຂດທີ່ມີຄວາມສ່ຽງ (ແຂວງສະຫວັນນະເຂດ) ກ່ອນຈະເລີ່ມການກໍ່ສ້າງ;
- ພິຈາລະນາວ່າຈ້າງແຮງງານໃນທ້ອງຖິ່ນມາເຮັດວຽກໃນໂຄງການຢ່າງເໝາະສົມ ແລະ ສະເໝີພາບລະຫວ່າງ ຍິງ ແລະ ຊາຍ, ເພື່ອໃຫ້ເຂົາເຈົ້າສາມາດສ້າງລາຍຮັບໃຫ້ແກ່ຄອບຄົວໄດ້;
- ໃນເວລາກໍ່ສ້າງເສັ້ນທາງ ແລະ/ຫຼື ຮ່ອງລະບາຍນໍ້າ ດິນທີ່ຂຸດແລ້ວຕ້ອງບໍ່ຕັນທາງນໍ້າໄຫຼ ເຊິ່ງຈະກໍ່ໃຫ້ເກີດນໍ້າຖ້ວມເນື້ອທີ່ນາ/ໄຮ່ ຂອງປະຊາຊົນ (ບົດຮຽນຈາກໂຄງການກໍ່ສ້າງເສັ້ນທາງອື່ນ);
- ເສັ້ນທາງທີ່ໄດ້ສະເໜີມາໃນເບື້ອງຕົ້ນບາງເສັ້ນທາງຜ່ານປ່າສະຫງວນແຫ່ງຊາດ ສະນັ້ນຈະຖືກປ່ຽນເສັ້ນທາງອື່ນ; DPWT ຈະອອກຈົດໝາຍເຖິງ MPWT ສຳລັບການປ່ຽນແປງດັ່ງກ່າວ;

- ກ່ອນທີ່ຈະເລີ່ມການກໍ່ສ້າງຕົວຈິງ ຈະຕ້ອງໄດ້ປຶກສາຫາລືກັບປະຊາຊົນຜູ່ທີ່ໄດ້ຮັບຜົນກະທົບຕາມເສັ້ນທາງ ເພື່ອສ້າງຈິດສຳນຶກກ່ຽວກັບກິດຈະກຳຂອງໂຄງການ, ມາດຕະການຫຼຸດຜ່ອນ E&S ແລະ GRM.

### 4.1.2 ການປຶກສາຫາລືກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ (PAPs)

21. ໄດ້ຈັດກອງປະຊຸມປຶກສາຫາລືກັບຜູ້ທີ່ໄດ້ຮັບຜົນກະທົບ ຢູ່ 3 ແຂວງ ໃນລະຫວ່າງວັນທີ 03 – 27 ຕຸລາ 2023, ມີ 615 ຄົນ (ຊາຍ 387 ຄົນ, ຍິງ 228 ຄົນ) ໃນ 22 ບ້ານ ທີ່ເປັນຕົວແທນຂອງຊົນເຜົ່າຕ່າງໆ ເຊັ່ນ: ລາວໄຕ, ຂະມຸ, ມາກົງ, ກະເລງ, ຈະເລີນ, ປູໄຕ. , Tri, Katang, Ta-oy, ແລະ Pako ໄດ້ເຂົ້າຮ່ວມໃນກອງປະຊຸມ. ການແບ່ງກຸ່ມສົນທະນາ (FGD) ຖືກນຳໃຊ້ເພື່ອເກັບກຳຄຳຄິດເຫັນ ແລະ ຄຳສະເໜີ ແລະ ຄຳແນະນຳ ຂອງຜູ້ຊາຍ ແລະ ແມ່ຍິງ ທີ່ແຍກເປັນກຸ່ມຕ່າງກັນ. ໂດຍທົ່ວໄປແລ້ວທີ່ໄດ້ຮັບຜົນກະທົບທັງຫມົດແມ່ນສະຫນັບສະຫນູນໂຄງການ ແລະ ຢາກໃຫ້ໂຄງການດັ່ງກ່າວເກີດຂຶ້ນໃນໄວໆນີ້, ໃນຂະນະທີ່ ຜູ້ໄດ້ຮັບຜົນກະທົບບາງຄົນມີບາງຄຳແນະນຳດັ່ງຕໍ່ໄປນີ້:

- ຖ້າເປັນໄປໄດ້, ຢາກສະເໜີໃຫ້ໂຄງການຊ່ວຍສະໜັບສະໜູນສິ່ງອຳນວຍຄວາມສະດວກທີ່ຈຳເປັນ ເຊັ່ນ: ສຸກສາລາ, ໂຮງຮຽນ, ແລະ ຕະຫຼາດຊຸມຊົນ ສຳລັບບ້ານທີ່ຍັງຂາດເຂີນ;
- ປັບປຸງເສັ້ນທາງເຂົ້າຫາບ້ານ ຫຼື ສະຖານທີ່ຕ່າງໆ ເຊັ່ນ: ໂຮງຮຽນ, ແລະ ພື້ນທີ່ກະສິກຳທີ່ບໍ່ຢູ່ໃນເຂດໂຄງການ;
- ກ່ອນການກໍ່ສ້າງ, ຈະຕ້ອງໄດ້ດຳເນີນການວັດແທກຜົນກະທົບລະອຽດ, ຖ້າຫາກມີຜົນກະທົບຕໍ່ຊັບສິນຂອງປະຊາຊົນຄວນມີການຊົດເຊີຍເສຍກ່ອນ;
- ໃນໄລຍະກໍ່ສ້າງເສັ້ນທາງແມ່ນຕ້ອງໄດ້ຫົດນ້ຳທາງ 1-3 ເທື່ອຕໍ່ມື້ ເພື່ອປ້ອງກັນຂີ້ຝຸ່ນ;
- ກ່ອນການກໍ່ສ້າງ, ໂຄງການຄວນຈັດກອງປະຊຸມກັບປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ກ່ຽວກັບການນຳໃຊ້ເສັ້ນທາງ ແລະ ຄວາມປອດໄພໃນການສັນຈອນ;
- ຄວນມີລະບຽບການຄຸ້ມຄອງການລັ່ງໄຫຼເຂົ້າມາຂອງກຳມະກອນຕ່າງຖິ່ນໃນສະໜາມກໍ່ສ້າງ;
- ຖ້າການວ່າເສັ້ນທາງຕັດຜ່ານ ຫຼື ກະທົບໃສ່ນາ ຫຼື ຜົນລະປູກຂອງປະຊາຊົນ ຄວນໃຫ້ເຂົາເຈົ້າເກັບກ່ຽວກ່ອນຈະດຳເນີນການກໍ່ສ້າງ;
- ໂຄງການຄວນພິຈາລະນາວ່າຈ້າງແຮງງານພື້ນຖານໃນທ້ອງຖິ່ນ ເພື່ອສະໜັບສະໜູນລາຍຮັບຂອງທ້ອງຖິ່ນ;
- ເອົາໃຈໃສ່ກ່ຽວກັບບັນຫາອຸບັດຕິເຫດໃນການສັນຈອນ ຕໍ່ເດັກນ້ອຍ ແລະ ຜູ້ສູງອາຍຸ ໃນລະຫວ່າງການກໍ່ສ້າງ.

22. ຄຳຕິຊົມທີ່ໄດ້ຮັບໃນລະຫວ່າງການປຶກສາຫາລືໄດ້ຖືກພິຈາລະນາເຂົ້າໃນ ESMF ຂອງໂຄງການ. ໄດ້ສັງລວມບັນດາຄຳສະເໜີ-ຄຳແນະນຳ ທີ່ໄດ້ຮັບ ແລະ ໄດ້ສັງລວມເຂົ້າໃນແຜນການມີສ່ວນຮ່ວມຂອງ ພາກສ່ວນທີ່ກ່ຽວຂ້ອງ ເຊິ່ງໄດ້ສະຫນອງຢູ່ໃນເອກະສານຊ້ອນທ້າຍ 1 (ບົດສະຫຼູບການປຶກສາຫາລື).

## 4.2. ສັງລວມກ່ຽວກັບ ຄວາມຕ້ອງການ ແລະ ວິທີການ, ເຄື່ອງມື ແລະ ເຕັກນິກ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຂອງໂຄງການ.

23. ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງແມ່ນມີຄວາມສຳຄັນຕໍ່ຜົນສຳເລັດ ແລະ ຄວາມຍືນຍົງຂອງໂຄງການໃນຂະແໜງການຕ່າງໆ. ຄວາມສຳຄັນຂອງການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງແມ່ນມີຄວາມສາມາດໃນການສົ່ງເສີມການຮ່ວມມື, ສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຮັບປະກັນວ່າຈະມີການພິຈາລະນາບັນດາມູມມອງທີ່ຫຼາກຫຼາຍ ເຂົ້າໃນຂະບວນການຕັດສິນໃຈ. ທີມງານໂຄງການຈະໃຊ້ວິທີການຕ່າງໆເພື່ອຕິດຕໍ່ສື່ສານກັບພາກສ່ວນກ່ຽວຂ້ອງ ລວມເຖິງກົນໄກທີ່ປະຊາຊົນສາມາດສະເໜີຂໍ້ຂ້ອງໃຈ, ໃຫ້ຄຳຄິດເຫັນ ຫຼື ຄຳຮ້ອງທຸກກ່ຽວກັບກິດຈະກຳຂອງໂຄງການ ຫຼື ກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບໂຄງການ. ວິທີການມີສ່ວນຮ່ວມທີ່ຫຼາກຫຼາຍຈະຖືກນຳໃຊ້ເພື່ອກວມເອົາຄວາມຕ້ອງການຂອງຜູ້ທີ່ມີສ່ວນຮ່ວມທີ່ແຕກຕ່າງກັນຕາມທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້:

(i) ໂຄງສ້າງແຜນດຳເນີນງານ,

(ii) ກອງປະຊຸມ / ການປຶກສາຫາລືເປັນກຸ່ມສະເພາະ ,

(iii) ການປຶກສາຫາລືກັບຊຸມຊົນ,

(iv) ກອງປະຊຸມປົກກະຕິ,

(v) ການສຳພາດຕົວຕໍ່ຕົວ, ແລະ

(vi) ການຢ້ຽມຢາມສະຖານທີ່

## 4.3. ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

24. ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ເປັນເອກະສານທີ່ມີໂຄງສ້າງເພື່ອແນະນຳວ່າໂຄງການມີຄວາມຕັ້ງໃຈ ໃນການມີສ່ວນຮ່ວມກັບພາກສ່ວນກ່ຽວຂ້ອງຄືແນວໃດ ໂດຍເຮັດໜ້າທີ່ເປັນແຜນງານສຳລັບການກຳນົດ, ການວິເຄາະ ແລະ ການສື່ສານກັບຜູ້ມີສ່ວນຮ່ວມເຂົ້າໃນທຸກຂັ້ນຕອນໃນວົງຈອນໂຄງການ. ຕາຕະລາງ 2 ຂ້າງລຸ່ມນີ້ໄດ້ສະຫຼຸບຄວາມຕ້ອງການສະເພາະ ແລະ ວິທີການສຳລັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ດັ່ງລາຍລະອຽດລຸ່ມນີ້.

*ຕາຕະລາງ 2: ສະຫຼຸບຄວາມຕ້ອງການ ແລະວິທີການໃນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ*

| ໄລຍະຂອງໂຄງການ | ຄາດຄະເນວັນ/ເວລາ | ຫົວຂໍ້ຂອງການປຶກສາຫາລື / ຄຳຄິດເຫັນ | ວິທີການທີ່ນຳໃຊ້ | ເປົ້າໝາຍຜູ້ເຂົ້າຮ່ວມ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|
| ການອອກແບບຕາມແນວຄວາມຄິດ, ກ່ອນການປະເມີນທະນາຄານໂລກ | Oct-Dec 2023 | ການປຶກສາຫາລືເບື້ອງຕົ້ນ, ກອງປະຊຸມຂັ້ນທ້ອງຖິ່ນເພື່ອແນະນຳກ່ຽວກັບໂຄງການ, ການສັງລວມຂໍ້ມູນຂ່າວສານກ່ອນການຈັດຕັ້ງ IEE ແລະ ຮ່າງເອກະສານ ESF. | ▪ ລົງກວດກາສະໜາມ ແລະ ດຳເນີນການປຶກສາຫາລືກັບອົງການພາກລັດທີ່ຮັບຜິດຊອບ, ພາກສ່ວນທີ່ກ່ຽວຂ້ອງ ແລະ PAPs;<br>▪ ນຳໃຊ້ຜູ້ອຳນວຍຄວາມສະດວກຈາກບ້ານ/ຜູ້ແປພາສາຊົນເຜົ່າ ເມື່ອມີປຶກສາຫາລືກັບກຸ່ມຊົນເຜົ່າ;<br>▪ ດຳເນີນການ FGD ກັບຜູ້ດ້ອຍໂອກາດ (PWD, LGBT ແລະກຸ່ມຊົນເຜົ່າ) ແຍກເປັນກຸ່ມຜູ້ຊາຍ ແລະ ແມ່ຍິງ;<br>▪ ລົງຢ້ຽມຢາມຄົວເຮືອນ / ສຳພາດ ແລະ ປຶກສາຫາລືຢູ່ໂຮງຮຽນ (ຖ້າຈຳເປັນ)<br>▪ ນຳໃຊ້ລຳໂພງ ແລະ ໂທລະໂຄ່ງຂອງໝູ່ບ້ານ. | ປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ ລວມທັງ ກຸ່ມຊົນເຜົ່າ, ອົງການພາກລັດທີ່ກ່ຽວຂ້ອງ ແລະ ຜູ້ມີທີ່ມີຄວາມສົນໃຈ | MPWT, EDPD/ PTI |
| ກ່ອນການປະເມີນຂອງທະນາຄານໂລກ | Feb 2024 | ປຶກສາຫາລືກ່ຽວກັບຮ່າງເອກະສານ ESF ແລະ ເຄື່ອງມືທີ່ກ່ຽວຂ້ອງ, ລວມທັງສະບັບແປເປັນພາສາລາວ ສຳລັບບົດຂັດຫຍໍ້ຂອງ ESMF. | ▪ ມີການປຶກສາຫາລືແບບເຊິ່ງໜ້າ ໃນລະດັບຊາດ ກັບ ອົງການພາກລັດທີ່ກ່ຽວຂ້ອງ ລວມທັງພາກສ່ວນທີ່ມີຄວາມສົນໃຈອື່ນໆ, ຊ່ອງທາງຜ່ານອອນລາຍ (ຜ່ານວີດີໂອ) ສຳລັບພາກສ່ວນກ່ຽວຂ້ອງຂອງແຂວງ/ທ້ອງຖິ່ນ. | ພະນັກງານລັດທີ່ຮັບຜິດຊອບ ແລະ ພາກສ່ວນກ່ຽວຂ້ອງ | MPWT, EDPD/ PTI |
| IEE | TBD | ຂອບເຂດສະເພາະຂອງຜົນກະທົບ E&S, ໂດຍອີງໃສ່ທີ່ຕັ້ງຂອງເສັ້ນທາງ/ໂຄງການຍ່ອຍທີ່ຈະໃຫ້ທຶນ. | ▪ ການຮ່າງເອກະສານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE) ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍ EIA (ສະບັບປັບປຸງໃນປີ 2022). ພ້ອມດ້ວຍຂໍ້ມູນດຽວກັນທີ່ເກັບກຳໃນລະຫວ່າງການກວດກາຄວາມສ່ຽງ E&S, | PONRE, DONRE | MPWT, ທີ່ປຶກສາ E&S |

| | | | | | |
|---|---|---|---|---|---|
| | | | ການກຳນົດລາຍການ ແລະ ການປຶກສາຫາລື ແລະ ສົ່ງໃຫ້ MONRE/PONRE ເພື່ອອະນຸມັດ;<br>▪ ໄດ້ຮັບ ECCs ຈາກ PONRE<br>▪ ການປຶກສາຫາລືກັນໃນລະດັບຊາດກັບອົງການ GoL ທີ່ກ່ຽວຂ້ອງ | | |
| ການອອກແບບລະອຽດ | TBD | ການວັດແທກລະອຽດກ່ຽວກັບຜົນກະທົບຕໍ່ທີ່ດິນ | ▪ ດຳເນີນການວັດແທກລະອຽດທີ່ດິນ ແລະ ສິ່ງປຸກສ້າງທີ່ໄດ້ຮັບຜົນກະທົບ (ຖ້າມີ);<br>▪ ການປຶກສາຫາລືແບບເຊິ່ງໜ້າກັບຜູ້ໄດ້ຮັບຜົນກະທົບກ່ຽວກັບແຜນການຍົກຍ້າຍຈັດສັນ (ຖ້າມີ) | ພາກສ່ວນກ່ຽວຂ້ອງຂອງ GOL ແລະ PAPs | ບໍລິສັດທີ່ປຶກສາ E&S, MPWT, ຄະນະກຳມະການຍົກຍ້າຍສິ່ງກີດຂວາງ (RCs) ຂັ້ນແຂວງ, ເມືອງ ແລະ ບ້ານ |
| | | ກຳນົດຜົນກະທົບ ແລະ ມາດຕະການຫຼຸດຜ່ອນເຂົ້າໃນ ESMP | ▪ ລົງກວດກາພາກສະໜາມ<br>▪ ການປຶກສາຫາລືຂັ້ນບ້ານ<br>▪ ຮັບປະກັນການປຶກສາຫາລືກັບຜູ້ຕາງໜ້າ ຊົນເຜົ່າ ແລະ ຕົວແທນຂອງກຸ່ມທີ່ມີຄວາມສ່ຽງ | ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ລວມທັງກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງອື່ນໆ; ອຳນາດການປົກຄອງບ້ານ ແລະ ພະນັກງານລັດທີ່ກ່ຽວຂ້ອງ | ບໍລິສັດທີ່ປຶກສາ E&S, MPWT ແລະ DPWT |
| ການຈັດຕັ້ງປະຕິບັດ: ວຽກກໍ່ສ້າງ | TBD | ວຽກທີ່ມີໃນລະຫວ່າງການກໍ່ສ້າງ. ການຝຶກອົບຮົມກ່ຽວກັບນິຕິບາດຍິງ-ຊາຍ, OHS, SEA/SH, ຄວາມປອດໄພຕາມທ້ອງຖະໜົນ ແລະ ຄວາມປອດໄພໃນການກໍ່ສ້າງ, ແລະ ອື່ນໆ. | ▪ ແຈ້ງການກ່ຽວກັບວຽກງານກໍ່ສ້າງ ແລະ ວຽກເຮັດງານທຳ ໃນກອງປະຊຸມຢູ່ບ້ານ<br>▪ ຮັບປະກັນກອງປະຊຸມລວມມີກຸ່ມທີ່ມີຄວາມສ່ຽງ<br>▪ ການຝຶກອົບຮົມເປັນກຸ່ມໃຫ້ແກ່ຜູ້ອອກແຮງງານ<br>▪ ການຝຶກອົບຮົມເປັນກຸ່ມໃຫ້ແກ່ແມ່ຍິງທີ່ອາໄສຢູ່ໃນຊຸມຊົນ<br>▪ ການຝຶກອົບຮົມເປັນກຸ່ມຢູ່ໂຮງຮຽນ | ພະນັກງານໂຄງການ, ລວມທັງແຮງງານທີ່ບໍ່ມີທັກສະ, ແມ່ຍິງ, ເດັກນ້ອຍ, ຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງອື່ນໆ | ຜູ້ຮັບເໝົາ, MPWT, EDPD/ PTI |

25. ຂໍ້ມູນຕ່າງໆຕໍ່ໄປນີ້ຈະຖືກເປີດເຜີຍຕໍ່ສາທາລະນະ:

- ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ (SEP), ລວມທັງຂັ້ນຕອນກົນໄກການຮ້ອງທຸກ (GM);
- ຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ ເອກະສານຊ້ອນທ້າຍຂອງມັນ
- ຂອບການວາງແຜນຈັດສັນຍົກຍ້າຍ (RPF)
- ແຜນພັນທະນາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP)

26. ຂໍ້ມູນໂຄງການຈະຖືກແຈກຢາຍຜ່ານຊ່ອງທາງດັ່ງຕໍ່ໄປນີ້:

- ເວັບໄຊທ໌ ຂອງ MPWT
- ແຜ່ນພັບຂໍ້ມູນຂ່າວສານໂຄງການ

- ການອະທິບາຍດ້ວຍວາຈາໂດຍຜ່ານ:
    i. ກອງປະຊຸມປຶກສາຫາລືກັບປະຊາຊົນຢູ່ຂັ້ນບ້ານ (ເພື່ອສົ່ງເສີມການມີສ່ວນຮ່ວມ ແລະ ສົ່ງເສີມຄວາມເຂົ້າໃຈຂອງຜູ້ໄດ້ຮັບຜົນປະໂຫຍດ ຈາກປະຊາຊົນບັນດາຊົນເຜົ່າທີ່ບໍ່ຄຸ້ນເຄີຍກັບຂໍ້ມູນທີ່ເປັນລາຍລັກອັກສອນ;
    ii. ແຍກກອງປະຊຸມປຶກສາຫາລື ເປັນກຸ່ມກັບກຸ່ມຄົນອ່ອນແອ;
    iii. ການປະຊຸມຕົວຕໍ່ຕົວ (ເຊັ່ນ: ກັບຄົນພິການ, ສະພາບພິເສດດ້ານເງື່ອນໄຂດ້ານສຸຂະພາບ ເພື່ອປ້ອງກັນບໍ່ໃຫ້ເຂົາເຈົ້າເຂົ້າຮ່ວມກອງປະຊຸມເປັນກຸ່ມ)
- ພາສາທີ່ຈະໃຊ້ຂຽນເປັນລາຍລັກອັກສອນ ແມ່ນພາສາລາວ. ສໍາລັບກຸ່ມຊົນເຜົ່າທີ່ໄດ້ຮັບຜົນປະໂຫຍດທີ່ບໍ່ຄຸ້ນເຄີຍກັບຄໍາເວົ້າ ການປຶກສາຫາລືຈະໄດ້ຮັບການອໍານວຍຄວາມສະດວກໂດຍຄົນທ້ອງຖິ່ນທີ່ສາມາດເວົ້າພາສາຂອງເຂົາເຈົ້າ (ເຊັ່ນ: ຜູ້ອໍານວຍຄວາມສະດວກໃນບ້ານ).

### 4.4. ການລາຍງານກັບຄືນຫາພາກສ່ວນທີ່ກ່ຽວຂ້ອງ

27. ພາກສ່ວນກ່ຽວຂ້ອງຈະໄດ້ຮັບການແຈ້ງໃຫ້ຊາບໃນຄະນະທີ່ໂຄງການເລີ່ມພັດທະນາ, ລວມທັງການລາຍງານການປະຕິບັດດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ ແລະ ການຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ , ກົນໄກການຮ້ອງທຸກ ແລະ ຄວາມຄືບໜ້າການຈັດຕັ້ງປະຕິບັດໂດຍລວມຂອງໂຄງການ.

## 5. ຊັບພະຍາກອນ ແລະ ຄວາມຮັບຜິດຊອບ

### 5.1 ຊັບພະຍາກອນ

28. EDPD/PTI ຈະຮັບຜິດຊອບໃນການຈັດຕັ້ງປະຕິບັດກິດຈະກໍາການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະໃຫ້ການສະໜັບສະໜູນດ້ານວິຊາການທີ່ຈໍາເປັນ ເພື່ອດໍາເນີນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ. ງົບປະມານຄາດຄະເນເບື້ອງຕົ້ນແມ່ນປະມານ 44,500 ໂດລາສະຫະລັດ ສໍາລັບການຈັດຕັ້ງປະຕິບັດ SEP ແລະ ກິດຈະກໍາການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ຍົກເວັ້ນຄ່າໃຊ້ຈ່າຍໃນການປຶກສາຫາລື ທີ່ລວມຢູ່ໃນກິດຈະກໍາໂຄງການຕ່າງໆ.

29. ຕາຕະລາງຂ້າງລຸ່ມນີ້ໃຫ້ຂໍ້ມູນການຕິດຕໍ່ບຸກຄົນສໍາຄັນ ດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງພາກສ່ວນ EDPD/PTI ທີ່ສາມາດສະເໜີຄໍາຄິດເຫັນ, ຄໍາຕິຊົມ, ຫຼື ຕັ້ງຄໍາຖາມ ກ່ຽວກັບໂຄງການ. ໃນກໍລະນີທີ່ມີການປ່ຽນແປງບຸກຄະລາກອນ ຈະມີການປັບປຸງ SEP ເພື່ອສະທ້ອນເຖິງການຈັດການພະນັກງານໃໝ່ ແລະ ຈະຖືກເປີດເຜີຍໂດຍຜ່ານຊ່ອງທາງດຽວກັນເພື່ອໃຫ້ຜູ້ມີສ່ວນຮ່ວມຂອງໂຄງການຮັບຮູ້ການປ່ຽນແປງ. ການປ່ຽນແປງຍັງຈະໄດ້ຮັບການປັບປຸງຕາມຄວາມເໝາະສົມຕາມເນື້ອຫາເພື່ອການປຶກສາຫາລື.

ຕາຕະລາງ 3 : ຂໍ້ມູນການຕິດຕໍ່ບຸກຄົນສໍາຄັນ ດ້ານສິ່ງແວດລ້ອມ ແລະ ສັງຄົມ

| ຂໍ້ມູນການຕິດຕໍ່ | ຜູ້ຊີ້ນໍາສິ່ງແວດລ້ອມໂຄງການ | ຜູ້ປະສານງານ ສິ່ງແວດລ້ອມ CRRCIP | ຜູ້ປະສານງານ GRM |
|---|---|---|---|
| ຊື່-ນາມສະກຸນ | ທ່ານ ສີລິພອນ ອິນທິລາດ | ທ່ານ ທອງຄອມ ຈັນທະລາ | ຈະໄດ້ລະບຸໃນ CRRCIP |
| ອີເມວ | siriphone.inthirath@gmail.com | chnthl@yahoo.com | |
| ໂທລະສັບ | 020 55561593 | 020 22033 971 | |

30. ງົບປະມານສໍາລັບ SEP ໃນການປະເມີນເບື້ອງຕົ້ນ USD 43,000 ເຊິ່ງລວມຢູ່ໃນອົງປະກອບ 2 ຂອງໂຄງການ.

ຕາຕະລາງ 4: ງົບປະມານສໍາລັບການຈັດຕັ້ງປະຕິບັດ SEP

| ລາຍການ | ຈໍານວນ | ມູນຄ່າ/ຄັ້ງ | ຄັ້ງ/ປີ | ມູນຄ່າລວມ |
|---|---|---|---|---|

| ລາຍການ | ຈຳນວນ | ມູນຄ່າ/ຄັ້ງ | ຄັ້ງ/ປີ | ມູນຄ່າລວມ |
|---|---|---|---|---|
| 1. ຄາດຄະເນງົບປະມານຂອງພະນັກງານສິ່ງແວດລ້ອມ | | | | |
| 1a. ເງິນເດືອນທີ່ປຶກສາ ES | 1 | ລວມໃນງົບປະມານຂອງ ESMF ລາຍການທີ 8 | | |
| 1b. ຄ່າໃຊ້ຈ່າຍໃນການເດີນທາງຂອງພະນັກງານເພື່ອລົງເກັບກຳຂໍ້ມູນ ແລະ ດຳເນີນການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ | 3 ແຂວງ | 6,500 | 1 ຄັ້ງ | 6,500 |
| 2. ໜ້າວຽກ | | | | |
| 2a.ການປຶກສາຫາລື ຂັ້ນສູນກາງເພື່ອເປີດເຜີຍ ແລະ ປຶກສາຫາລືເອກະສານ ESF (ESMF, ESCP, SEP) | 1 ໃນຂັ້ນສູນກາງ | 5,000 | 1 ຄັ້ງ | 5,000 |
| 2.b. ການຈັດຕັ້ງປະຕິບັດ SEP- ການປຶກສາຫາລືກັບທ້ອງຖິ່ນເພື່ອແນະນຳກ່ຽວກັບໂຄງການ, ກິດຈະກຳ, ຜົນກະທົບທາງບວກ-ທາງລົບ ພ້ອມດ້ວຍມາດຕະການຫຼຸດຜ່ອນ ແລະ ຂະບວນການ GRM ໃນທຸກບ້ານທີ່ຢູ່ໃນໂຄງການຍ່ອຍ. ຈັດໂດຍຜູ້ຮັບເໝົາກໍ່ສ້າງ | 3 ແຂວງ (ທຸກໆບ້ານ) | | ງົບຂອງຜູ້ຮັບເໝົາກໍ່ສ້າງ | |
| 3. Communication campaigns ການໂຄສະນາການສື່ສານ | | | | |
| 3a. ແຜ່ນພັບຂໍ້ມູນໂຄງການ, ໂປສເຕີ, ປ້າຍໂຄງການ ແລະ ບົດສັງລວມຫຍໍ້ຂອງ ESMF (ສະຫຼຸບຄວາມສ່ຽງ/ຜົນກະທົບ ແລະ ມາດຕະການຫຼຸດຜ່ອນ) ທັງພາສາອັງກິດ ແລະ ພາສາລາວ. | 3 ແຂວງ | 5,000 | 1 ຄັ້ງ | 5,000 |
| 3.b. ພິມເອກະສານປູກຈິດສຳນຶກ/ເອກະສານແກ້ໄຂຂໍ້ຂັດແຍ່ງ | 3 ແຂວງ | 5,000 | 1 | 5,000 |
| 4. ຝຶກອົບຮົບ | | | | |
| 4a. ການຝຶກອົບຮົມກ່ຽວກັບບັນຫາສັງຄົມ / ສິ່ງແວດລ້ອມສຳລັບ PIU ແລະ ພະນັກງານຜູ້ຮັບເຫມົາ | 3 ແຂວງ | 6,500 | 1 ຄັ້ງ | 6,500 |
| 4b. ການຝຶກອົບຮົມກ່ຽວກັບຄວາມຮຸນແຮງທາງເພດ (GBV) ສຳລັບໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) ແລະ ພະນັກງານຜູ້ຮັບເໝົາ | 3 ແຂວງ | 6,500 | 1 ຄັ້ງ | 6,500 |
| 5. ກົນໄກການຮ້ອງທຸກ | | | | |
| ຝຶກອົບຮົມກ່ຽວກັບ GM ໃຫ້ແກ່ຄະນະກຳມະການ ແລະ ຕິດຕັ້ງກ່ອງຮັບຄຳຮ້ອງທຸກ | 3 ແຂວງ | 8,500 | 1 ຄັ້ງ | 8,500 |
| **ລວມງົບປະມານສຳລັບແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ:** | | | | **43,000** |

## 5.2. ການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບ

31. ການຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຈະເປັນຄວາມຮັບຜິດຊອບຂອງ PMU ຂອງ MPWT ເຊິ່ງຈະປະກອບດ້ວຍຜູ້ຊີ້ນຳການໂຄງການ (PD), ຫົວໜ້າການໂຄງການ (PM) ແລະ ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ການຂົນສົ່ງ (EDPD/PTI). ພວກເຂົາເຈົ້າຈະຊີ້ນຳຂະບວນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຕະຫຼອດໄລຍະການການກະກຽມ ແລະ ການຈັດຕັ້ງປະຕິບັດ CRRCIP. PMU ຂອງ MPWT ໂດຍມີການສະໜັບສະໜູນດ້ານວິຊາການຈາກ EDPD/PTI ຕ້ອງມີຫ້ອງການທີ່ມີພະນັກງານ ແລະ ງົບປະມານ ເຊິ່ງຫ້ອງການນີ້ຈະຮັບຜິດຊອບ ເບິ່ງພາບລວມໃນການຈັດຕັ້ງປະຕິບັດ SEP.

ຕາຕະລາງ 5: ພະນັກງານ ແລະ ໜ້າທີ່ຮັບຜິດຊອບສຳລັບກິດຈະກຳ ຂອງ SEP

| ພະນັກງານ | ໜ້າທີ່ຮັບຜິດຊອບ |
|---|---|

| ພະນັກງານ | | ໜ້າທີ່ຮັບຜິດຊອບ |
|---|---|---|
| MPWT/PMU | ຜູ້ຊີ້ນຳໂຄງການ | • ທົບທວນ ແລະ ຮັບຮອງບົດລາຍງານປະຈຳເດືອນກ່ຽວກັບການແກ້ໄຂຄຳຮ້ອງທຸກ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ; ແລະ<br>• ແຈ້ງໃຫ້ທະນາຄານໂລກຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດ SEP. |
| | ຫົວໜ້າໂຄງດານ ຂອງ PMU | • EDPD/PTI ຊີ້ນຳລວມ ແລະ ຂະບວນການແກ້ໄຂຄຳຮ້ອງທຸກ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ; ແລະ<br>• ສົ່ງບົດລາຍງານປະຈຳເດືອນໃຫ້ຜູ້ຊີ້ນຳໂຄງການ. |
| | EDPD/PTI (ໂດຍໄດ້ຮັບການສະໜັບສະໜູນຈາກບໍລິສັດທີ່ປຶກສາສິ່ງແວດລ້ອມ ແລະສັງຄົມ, DPWT ແລະ ບໍລິສັດທີ່ປຶກສາໂຄງການ) | • ຊີ້ນຳ, ຕິດຕາມກວດກາ ແລະ ລາຍງານການຈັດຕັ້ງປະຕິບັດ SEP ລວມທັງເຄື່ອງມືປົກປ້ອງອື່ນໆ<br>• ໃຫ້ການສະໜັບສະໜູນດ້ານວິຊາການກ່ຽວກັບການສ້າງຄວາມອາດສາມາດໃຫ້ແກ່ພະນັກງານຂອງອົງການລັດທີ່ ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ SEP ເພື່ອແກ້ໄຂຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ.<br>• ປະເມີນຄວາມຄືບໜ້າ, ການເຂົ້າເຖິງ ແລະ ປະສິດທິພາບຂອງກົນໄກການແກ້ໄຂຄຳຮ້ອງທຸກ (GRM) ແລະ ຖານຂໍ້ມູນ GRM ຂອງໂຄງການໂດຍລວມແມ່ນຖືກຮັກສາໄວ້ ແລະ ລາຍງານໃນລະດັບນີ້.<br>• ດຳເນີນການຝຶກອົບຮົມກ່ຽວກັບຄວາມຮຸນແຮງທາງເພດ, HIV/AIDS, ຄວາມປອດໄພທາງຖະໜົນ ແລະ ອື່ນໆ ຕາມທີ່ໄດ້ອະທິບາຍໄວ້ໃນ SEP ນີ້.<br>• ຊ່ວຍໃນການກຳນົດກຸ່ມຊົນເຜົ່າ ເພື່ອເຮັດວຽກຮ່ວມກັບ EDPD/PTI.<br>• ດຳເນີນການຕິດຕາມກວດກາ ແລະ ລາຍງານການຈັດຕັ້ງປະຕິບັດມາດຕະຖານສິ່ງແວດລ້ອມ ແລະສັງຄົມ (ESS) ເຄິ່ງປີ ແລະ ປະຈຳປີ. ບົດລາຍງານການຕິດຕາມກວດກາ ປະຈຳເຄິ່ງປີ ແລະ ປະຈຳປີ ແລະ ສິ່ງທີ່ພົບເຫັນທີ່ສຳຄັນໃນການຈັດຕັ້ງປະຕິບັດກິດຈະກຳ SEP ແລະ ສົ່ງໃຫ້ DOR-MPWT, PMU/PTI, PIU, ISWS, ແລະ WB. |
| ຜູ້ຮັບເໝົາ | ຫົວໜ້າວິສະວະກອນ ແລະ ທີມງານສິ່ງແວລ້ອມ | • ດຳເນີນການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ກ່ຽວກັບໄລຍະເວລາຂອງໂຄງການ, ຫຼຸດຜ່ອນຜົນກະທົບຈາກວຽກງານກໍ່ສ້າງ (ເຊັ່ນ: ຂີ້ຝຸ່ນ, ການຈະລາຈອນ) ແຈ້ງໃຫ້ພາກສ່ວນກ່ຽວຂ້ອງກ່ຽວກັບການເຮັດວຽກ.<br>• ຮັບປະກັນການພິຈາລະນາຢ່າງຮອບຄອບກ່ຽວກັບແມ່ຍິງ ແລະ ກຸ່ມທີ່ມີຄວາມສ່ຽງ, ລວມເຂົາເຈົ້າເຂົ້າໃນການປຶກສາຫາລື ເພື່ອບໍ່ໃຫ້ພວກເຂົາພາດໂອກາດເຮັດວຽກ.<br>• ດຳເນີນການຝຶກອົບຮົມກ່ຽວກັບລະບຽບການປະພຶດຂອງກຳມະກອນ, ລວມທັງພຶດຕິກຳທີ່ເໝາະສົມ ແລະ ການພົວພັນກັບຄວາມຮຸນແຮງທາງເພດ (GBV), ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ ແລະ ຄວາມຮຸນແຮງຕໍ່ເດັກ (VAC) ແລະ OHS.<br>• ດຳເນີນການຝຶກອົບຮົມ ແລະ ການສ້າງຈິດສຳນຶກ ກ່ຽວກັບຄວາມປອດໄພທາງຖະໜົນ ເຊິ່ງຈະຈັດຕັ້ງປະຕິບັດຮ່ວມກັນກັບຕຳຫຼວດຈະລາຈອນ ແລະ ກຸ່ມເປົ້າໝາຍ. |

# 6. ກົນໄກການຮ້ອງທຸກ

## 6.1 ອະທິບາຍກ່ຽວກັບກົນໄກການຮ້ອງທຸກ

32. ເປົ້າໝາຍຫຼັກຂອງ GM ແມ່ນເພື່ອຊ່ວຍເຫຼືອແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຂ້ອງໃຈຢ່າງທັນການ, ມີປະສິດທິພາບ ແລະ ປະສິດທິຜົນ ທັງຕອບສະໜອງທຸກພາກສ່ວນທີ່ກ່ຽວຂ້ອງ.

ຕາຕະລາງ 6: ຂັ້ນຕອນກ່ຽວກັບກົນໄກແກ້ໄຂການຮ້ອງທຸກ GRM

| ຂັ້ນຕອນ | ລາຍລະອຽດການດຳເນີນງານ | ກອບເວລາ | ພາກສ່ວນຮັບຜິດຊອບ |
|---|---|---|---|
| ໂຄງຮ່າງການຈັດຕັ້ງປະຕິບັດ ກົນໄກການຮ້ອງທຸກ | ມີການກຳນົດຊ່ອງທາງຕ່າງໆ ເພື່ອເຮັດໃຫ້ຜູ້ໄດ້ຮັບຜົນກະທົບສາມາດຍື່ນຄຳຮ້ອງທຸກໄດ້ ລວມທັງການຍື່ນຄຳສະເໜີຕໍ່ຄະນະກຳມະການບ້ານ ຕະຫຼອດຮອດຂັ້ນເມືອງ ແລະ ຂັ້ນແຂວງ. ການຮ້ອງທຸກຍັງສາມາດສົ່ງໄດ້ຫຼາຍທາງດັ່ງລາຍລະອຽດລຸ່ມນີ້:<br>i. ສົ່ງອີເມວຫາ PMU (ຕອບກັບພາຍໃນ 5 ວັນລັດຖະການ);<br>ii. ຫ້ອງຫາການ PMU ຢູ່ຂັ້ນເມືອງ;<br>iii. ພະນັກງານໂຄງການ (ລວມທັງພະນັກງານໂຄງການຢູ່ເມືອງ, ອົງການປົກຄອງບ້ານ) ໃນລະຫວ່າງການປະຊຸມ ຫຼືໃນລະຫວ່າງການຢ້ຽມຢາມ;<br>iv. ຜູ້ປະສານງານ GRM ໃນລະດັບແຂວງ;<br>v. ຄະນະກຳມະການໄກ່ເກ່ຍຂັ້ນບ້ານ (ເອກະສານຈາກຄະນະກຳມະການອື່ນໆ ທີ່ສ້າງຂຶ້ນເພື່ອຕອບສະໜອງຈຸດປະສົງໂຄງການ). ພາຍໃນ 5 ວັນລັດຖະການ ຫຼັງຈາກໄດ້ຮັບຄຳຮ້ອງທຸກ, VMC ຈະແຈ້ງໃຫ້ຜູ້ຮ້ອງທຸກ ວ່າການຮ້ອງທຸກສາມາດແກ້ໄຂໄດ້ໃນລະດັບບ້ານ ຫຼື ຈະຖືກຂະຫຍາຍໄປສູ່ລະດັບຕໍ່ໄປ. ໂດຍທົ່ວໄປແລ້ວ ຄຳຮ້ອງທຸກຈະຖືກແກ້ໄຂພາຍໃນ 10 ວັນລັດຖະການ ໃນລະດັບ VMC. ເມື່ອ VMC ໄດ້ຮັບການຮ້ອງທຸກຈາກຜູ້ຮ້ອງທຸກ, ເຂົາເຈົ້າຈະລາຍງານຕໍ່ຈຸດປະສານງານ GRM/PMU ເພື່ອເຮັດໃຫ້ພວກເຂົາຮັບຮູ້ ແລະ ຕິດຕາມວິທີການຈັດການກັບການຮ້ອງທຸກ. | ສຳເລັດພາຍໃນ 5 ວັນລັດຖະການ | PMU ໃນທຸກຂັ້ນ, ພະນັກງານໂຄງການ ແລະ ຄະນະກຳມະການໄກ່ເກ່ຍບ້ານ |
| ການຮັບຄຳຮ້ອງທຸກ | ການຮ້ອງທຸກສາມາດເຮັດໃນຮູບແບບເປັນລາຍລັກອັກສອນ ແລະ ດ້ວຍວາຈາ ແລະ ໂດຍຄົວເຮືອນທີ່ໄດ້ຮັບຜົນກະທົບໂດຍກົງ ຫຼື ໂດຍບຸກຄົນທີ່ໄດ້ຮັບມອບຫມາຍຈາກຜູ້ໄດ້ຮັບຜົນກະທົບ. ຄຳຮ້ອງທຸກຈະບໍ່ເປີດເຜີຍຊື່ຜູ້ຮ້ອງທຸກ ແລະ ຈະເກັບຮັກສາຄວາມລັບໄວ້. | ເມື່ອໄດ້ຮັບການຮ້ອງຮຽນ | ຈຸດປະສານງານການຮ້ອງທຸກໃນທ້ອງຖິ່ນ |
| ການຄັດເລືອກ ແລະ ການດຳເນີນງານ | ○ ຄຳຮ້ອງທຸກທີ່ໄດ້ຮັບແມ່ນຈະຖືກສົ່ງໄປຫາຈຸດປະສານງານການຮ້ອງທຸກໃນທ້ອງຖິ່ນເພື່ອບັນທຶກໄວ້ໃນປຶ້ມບັນທຶກການຮ້ອງທຸກ ແລະ ຈັດປະເພດຕາມປະເພດຄຳຮ້ອງທຸກຕໍ່ໄປນີ້:<br>○ ການຮ້ອງທຸກທີ່ກ່ຽວຂ້ອງກັບຜົນກະທົບຕໍ່ທີ່ດິນ (ທີ່ປະຕິບັດຕາມ GRM ໃນ RPF/ຮ່າງບົດລາຍງານ RAPs ຂອງໂຄງການ).<br>○ ການຮ້ອງທຸກທີ່ກ່ຽວຂ້ອງກັບກຸ່ມຊົນເຜົ່າກ່ຽວກັບຄວາມຮຸນແຮງທາງເພດ (GBV), ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (SEA/SH) ແລະ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (VAC)<br>○ ຄຳຮ້ອງທຸກທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ (ລວມທັງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ສຸຂະພາບ, ແຄ້ມພັກຂອງພະນັກງານ, ຄວາມປອດໄພທາງຖະໜົນ, ມົນລະພິດ, ສິ່ງເສດເຫຼືອ ແລະອື່ນໆ). ບາງສ່ວນຂອງສິ່ງເຫຼົ່ານີ້ອາດຈະເປັນຜົນກະທົບສະເພາະຂອງຊົນເຜົ່າ.<br>○ ການຮ້ອງທຸກກ່ຽວກັບການເຮັດວຽກ (ລາຍລະອຽດໃນ LMP ຂອງໂຄງການ). | ເມື່ອໄດ້ຮັບການຮ້ອງທຸກ ແລະ ຄວນຈະໄດ້ຮັບການຄົ້ນຄວ້າພາຍໃນສອງອາທິດ. | ຈຸດປະສານງານການຮ້ອງທຸກໃນທ້ອງຖິ່ນ |
| ການຮັບຮູ້ ແລະ ການຕິດຕາມ | ຄຳຮ້ອງທຸກຈະຖືກຮັບຮູ້ພາຍໃນ 5 ວັນນັບຈາກມື້ໄດ້ຮັບການຮ້ອງທຸກ. ໜ່ວຍງານຮັບຜິດຊອບການແກ້ໄຂຄຳຮ້ອງທຸກຈະແຈ້ງໃຫ້ຜູ້ຮ້ອງທຸກເມື່ອໄດ້ຮັບຄຳຮ້ອງທຸກ ແລະ ຈະເລີ່ມຂະບວນການແກ້ໄຂຄຳຮ້ອງທຸກ. | ພາຍໃນ 5 ວັນຫຼັງໄດ້ຮັບຄຳຮ້ອງທຸກ | ຈຸດປະສານງານການຮ້ອງທຸກໃນທ້ອງຖິ່ນ |
| ການກວດສອບ, | ການພິຈາລະນາຄຳຮ້ອງທຸກແມ່ນນຳພາໂດຍຜູ້ປະສານງານການຮ້ອງທຸກໃນທ້ອງຖິ່ນ. | ສຳເລັດພາຍໃນ 10 | VMC, District |

| ຂັ້ນຕອນ | ລາຍລະອຽດການດຳເນີນງານ | ກອບເວລາ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| ການສືບສວນ, ການດຳເນີນການ | ການສະເໜີວິທີການແກ້ໄຂແມ່ນສ້າງຂຶ້ນໂດຍ PMU ແລະ ການສື່ສານກັບຜູ້ຮ້ອງທຸກດ້ວຍຈົດໝາຍ ຫຼື ທາງໂທລະສັບ. ຖ້າການແກ້ໄຂຄຳຮ້ອງທຸກບໍ່ໄດ້ເປັນທີ່ພໍໃຈຂອງຄະນະກຳມະການຂັ້ນບ້ານ/ຄະນະກຳມະການໄກ່ເກ່ຍຂັ້ນເມືອງ, ຜູ້ທີ່ໄດ້ຮັບຜົນກະທົບອາດຈະສະເໜີຕໍ່ໄປຍັງຂັ້ນແຂວງ ເພື່ອພິຈາລະນາ ແລະ ຕັດສິນກ່ອນທີ່ຈະຍື່ນສະເໜີຕໍ່ສານເພື່ອພິຈາລະນາແກ້ໄຂ (ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ເລກທີ 106/ສພຊ, 2022) . | ວັນລັດຖະການ | PMU |
| ການຕິດຕາມ ກວດກາ ແລະ ການປະເມີນຜົນ | ຂໍ້ມູນກ່ຽວກັບການຮ້ອງທຸກແມ່ນໄດ້ຮັບການເກັບກຳຂໍ້ມູນໃນບັນທຶກການຮ້ອງທຸກ ແລະ ລາຍງານກັບ PMU ຂັ້ນສູນກາງ ທຸກໆ 3 ເດືອນ, ການຮ້ອງທຸກທັງຫມົດຈະໄດ້ຮັບການຕິດຕາມໂດຍຜູ້ປະສານງານ GRM ຂອງ PMU . | ທຸກໆ 3 ເດືອນ | ຈຸດປະສານງານການຮ້ອງທຸກໃນທ້ອງຖິ່ນ |
| ການໃຫ້ຄຳຄິດຄຳເຫັນ | ການຕິຊົມຈາກຜູ້ຮ້ອງທຸກກ່ຽວກັບຄວາມເພິ່ງພໍໃຈ ຂອງເຂົາຕໍ່ການແກ້ໄຂການຄຳຮ້ອງທຸກແມ່ນເກັບກຳໂດຍຈຸດປະສານງານການຮ້ອງທຸກທ້ອງຖິ່ນ. ທຸກຄຳຮ້ອງທຸກທີ່ໄດ້ຮັບແມ່ນບັນທຶກໄວ້ໂດຍຈຸດປະສານງານການຮ້ອງທຸກຂອງທ້ອງຖິ່ນ ແລະ ຄະນະໄກ່ເກ່ຍຂອງບ້ານທີ່ກ່ຽວຂ້ອງ ແລະ ໄດ້ຖືກປະເມີນຜົນ/ແກ້ໄຂຕາມກຳນົດເວລາ. | ທຸກໆ 6 ເດືອນ | ຈຸດປະສານງານການຮ້ອງທຸກໃນທ້ອງຖິ່ນ, VMC, PMU |
| ຝຶກອົບຮົມ | ຄວາມຕ້ອງການໃນການຝຶກອົບຮົມສຳລັບພະນັກງານ / ທີ່ປຶກສາຂອງ PMU, ຜູ້ຮັບເໝົາກໍ່ສ້າງ ແລະ ທີ່ປຶກສາການຊີ້ນຳໂຄງການ ດັ່ງລະບຸໄວ້ໃນຕາຕະລາງ 3 ຂ້າງເທິງ. | ກ່ອນຈະເລີ່ມໂຄງການ | PMU ໃນຂັ້ນສູນກາງ |
| ຖ້າມີຄວາມກ່ຽວຂ້ອງ, ໃຫ້ຈ່າຍຄ່າຊົດເຊີຍຕາມການແກ້ໄຂຄຳຮ້ອງທຸກ | ຜູ້ທີ່ຮ້ອງທຸກຈະບໍ່ເສຍຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບຂະບວນການແກ້ໄຂຄຳຮ້ອງທຸກທັງໝົດ. ຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກການແກ້ໄຂຄຳຮ້ອງທຸກ ທາງໂຄງການຈະຕ້ອງເປັນຜູ້ຮັບຜິດຊອບທັງໝົດ. ແນວໃດກໍ່ດີ, ຖ້າຄຳຮ້ອງຮຽນນຳເອົາຄະດີຂອງເຂົາເຈົ້າຂຶ້ນສານຕາມຄວາມຕ້ອງການ, ເຂົາເຈົ້າຈະຮັບຜິດຊອບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຟ້ອງຮ້ອງ. | | |

33. GM ຈະກະກຽມຂະບວນການອຸທອນຖ້າຜູ້ຮ້ອງທຸກບໍ່ພໍໃຈກັບການແກ້ໄຂຄຳຮ້ອງທຸກທີ່ສະເໜີມາ ຖ້າຫາກວ່າໄດ້ນຳໃຊ້ການແກ້ໄຂຄຳຮ້ອງທຸກ ໃນທຸກວິທີທາງແລ້ວ ແຕ່ວ່າຜູ້ຮ້ອງທຸກຍັງບໍ່ພໍໃຈ ເຂົາເຈົ້າຄວນຈະໄດ້ຮັບການແນະນຳກ່ຽວກັບສິດໃນການຂໍຄວາມຊ່ວຍເຫຼືອທາງດ້ານກົດໝາຍ.

34. GRM ນີ້ຍັງໃຊ້ໄດ້ກັບຄວາມຮຸນແຮງທາງເພດ (GBV), ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (SEA/SH) ແລະ ຄວາມຮຸນແຮງຕໍ່ເດັກນ້ອຍ (VAC) ເຖິງແມ່ນວ່າຜູ້ຮ້ອງທຸກ ສາມາດເລືອກທີ່ຈະສົ່ງຄຳຮ້ອງທຸກຂອງຕົນໂດຍກົງໄປຫາໜ່ວຍບໍລິການ GBV ເຊັ່ນ: ສະຫະພັນແມ່ຍິງລາວ (LWU) ທີ່ຮັບຜິດຊອບໃນການປະກາດໃຊ້ ແລະ ເສີມສ້າງກົດໝາຍວ່າດ້ວຍການຕ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (2014). ອົງການຈັດຕັ້ງມະຫາຊົນນີ້ໄດ້ຮັບການສະໜັບສະໜູນ ແລະ ການຝຶກອົບຮົມໂດຍ UNFPA, UNICEF ແລະ DPs ແລະອື່ນໆ ກ່ຽວກັບວິທີການເອົາຊີວິດລອດເປັນຈຸດໃຈກາງໃນການຮັບມືກັບເຫດການ SEA/SH.

35. ໃນກໍລະນີທີ່ຄຳຮ້ອງທຸກຍັງບໍ່ສາມາດແກ້ໄຂໄດ້ ຫຼື ແກ້ໄຂບໍ່ໄດ້ຕາມຄວາມພໍໃຈຂອງຜູ້ຮ້ອງທຸກ ພວກເຂົາມີສິດຍື່ນຄຳຮ້ອງທຸກຕໍ່ອຳນາດການປົກຄອງຂັ້ນເມືອງ ຫຼື ຂັ້ນແຂວງຕາມລຳດັບຂອງຂະບວນການຮ້ອງທຸກ. ຜູ້ຮ້ອງທຸກຍັງສາມາດຕັດສິນໃຈສົ່ງການຮ້ອງທຸກໂດຍກົງຕໍ່ສານ. ຜູ້ຮ້ອງທຸກຈະຮັບຜິດຊອບຄ່າໃຊ້ຈ່າຍສຳລັບຂັ້ນຕອນເຫຼົ່ານີ້ແຕ່ຈະຖືກຈ່າຍຄືນ ໂດຍ ເຈົ້າຂອງໂຄງການ ຖ້າການຮ້ອງຟ້ອງຂອງພວກເຂົາປະສົບຜົນສຳເລັດ.

36. ທະນາຄານໂລກ ແລະ ຜູ້ກູ້ຢືມ ບໍ່ຍອມໃຫ້ມີການຕອບໂຕ້ ແລະ ການຕອບໂຕ້ຕໍ່ພາກສ່ວນທີ່ກ່ຽວຂ້ອງ ຂອງໂຄງການສະແດງຄຳຄິດເຫັນ ກ່ຽວກັບໂຄງການທີ່ໃຫ້ທຶນຈາກທະນາຄານ.

# 7. ການຕິດຕາມກວດກາ ແລະ ການລາຍງານ

## 7.1 ສັງລວມວິທີການຈັດຕັ້ງປະຕິບັດ SEP ທີ່ຈະມີການຕິດຕາມກວດກາ ແລະ ການລາຍງານ

37. ການຕິດຕາມກວດກາຈະດຳເນີນການຢ່າງເປັນປົກກະຕິ ເພື່ອບໍ່ໃຫ້ເກີດຄວາມສ່ຽງຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນໄລຍະການກໍ່ສ້າງ. ການຕິດຕາມກວດກາບັນຫາສິ່ງແວດລ້ອມ ແລະ ສັງຄົມຈະເນັ້ນໃສ່ຜົນກະທົບທີ່ລະບຸໄວ້ໃນ SS-ESMPs, SS-BMPs, IEE ແລະ ARAPs, ແລະ ສະເໜີມາດຕະການຫຼຸດຜ່ອນທີ່ເໝາະສົມ. PMU ຂອງ MPWT ໂດຍການສະໜັບສະໜູນດ້ານວິຊາການຈາກ EDPD/PTI ຈະຕິດຕາມກວດກາການຈັດຕັ້ງປະຕິບັດໂດຍລວມ. PIU ຂອງ DPWT ກັບ TA ຈາກບໍລິສັດທີ່ປຶກສາຊີ້ນຳໂຄງການ ຈະຮັບຜິດຊອບໃນການຕິດຕາມກວດກາປະຈຳວັນ ໃນການຈັດຕັ້ງປະຕິບັດ CESMPs ທີ່ຈັດຕັ້ງປະຕິບັດໂດຍຜູ້ຮັບເໝົາ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ. ນອກຈາກນັ້ນ PIU ຂອງ DPWT ຮ່ວມກັບ EDPD/PTI ຈະສືບຕໍ່ຕິດຕາມກວດກາປະສິດທິພາບຂອງ SS-ESMPs ແລະ SEP ໃນໄລຍະຫຼັງຈາກການກໍ່ສ້າງ ແລະ ກຳນົດຄວາມສ່ຽງທີ່ອາດຈະເກີດຂຶ້ນໃນໄລຍະດຳເນີນການກໍ່ສ້າງ. ຜູ້ຮັບເໝົາຈະກະກຽມບົດລາຍງານຄວາມຄືບໜ້າປະຈຳໄຕມາດ, ເຄິ່ງປີ ແລະ ປະຈຳປີ ທີ່ຈະສະຫຼຸບສັງລວມການປະຕິບັດຕາມ SS-ESMPs, SS-BMPs ແລະ SEP, ບົດລາຍງານເຫຼົ່ານີ້ຈະຖືກສົ່ງໃຫ້ PIU ຂອງ DPWT ເພື່ອສົ່ງຕໍ່ໃຫ້ PMU, EDPD/PTI ແລະ WB. ບົດລາຍງານເຫຼົ່ານີ້ຍັງຈະຖືກເປີດເຜີຍຕໍ່ສາທາລະນະ. PIU ຂອງ DPWT ແລະ ຜູ້ຮັບເໝົາໂດຍຜ່ານບໍລິສັດທີ່ປຶກສາຊີ້ນຳໂຄງການ ຈະກະກຽມບົດລາຍງານປະຈຳເດືອນໂດຍຫຍໍ້ກ່ຽວກັບກິດຈະກຳການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງສຳລັບການດຳເນີນການເຊິ່ງປະກອບມີ:

- ກິດຈະກຳທີ່ໄດ້ດຳເນີນໃນແຕ່ລະເດືອນ;
- ກິດຈະກຳເຜີຍແຜ່ຕໍ່ສາທາລະນະ (ກອງປະຊຸມກັບພາກສ່ວນກ່ຽວຂ້ອງ). ຖ້າມີຄວາມຈຳເປັນ ບົດລາຍງານນີ້ຈະລວມເອົາການແປເປັນພາສາຊົນເຜົ່າທີ່ກ່ຽວຂ້ອງ;
- ບັນທຶກການຮ້ອງທຸກ;
- ແຜນການສຳລັບເດືອນຕໍ່ໄປ ແລະ ແຜນການໄລຍະຍາວ.

## 7.2 ການລາຍງານຄືນໃຫ້ກັບພາກສ່ວນກ່ຽວຂ້ອງ

38. SEP ຈະໄດ້ຮັບການທົບທວນ ແລະ ປັບປຸງເປັນໄລຍະຕາມຄວາມຈຳເປັນໃນໄລຍະການຈັດຕັ້ງປະຕິບັດໂຄງການ. ບົດສະຫຼຸບປະຈຳໄຕມາດ ແລະ ບົດລາຍງານພາຍໃນກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງສາທາລະນະຊົນ, ການສອບຖາມ ແລະ ເຫດການທີ່ກ່ຽວຂ້ອງ, ເຊັ່ນດຽວກັນກັບສະຖານະຂອງການຈັດຕັ້ງປະຕິບັດການແກ້ໄຂ/ປ້ອງກັນທີ່ກ່ຽວຂ້ອງ ຈະຖືກສັງລວມໂດຍພະນັກງານທີ່ຮັບຜິດຊອບ ແລະ ສົ່ງໃຫ້ຜູ້ບໍລິຫານລະດັບສູງຂອງໂຄງການ. ບົດສະຫຼຸບປະຈຳໄຕມາດຈະສະໜອງກົນໄກສຳລັບການປະເມີນ ກ່ຽວກັບຈຳນວນ ແລະ ລັກສະນະ ຂອງຄຳຮ້ອງທຸກ ແລະ ການຮ້ອງຂໍຂໍ້ມູນລວມທັງຄວາມອາດສາມາດຂອງໂຄງການໃນການແກ້ໄຂບັນຫາ ຢ່າງມີປະສິດທິພາບ ແລະ ທັນກັບເວລາ. ຂໍ້ມູນກ່ຽວກັບກິດຈະກຳການມີສ່ວນຮ່ວມຂອງມວນຊົນ ທີ່ດຳເນີນການໂດຍໂຄງການໃນລະຫວ່າງປີ ຈະຖືກສົ່ງໃຫ້ຜູ້ມີສ່ວນຮ່ວມໃນຮູບແບບຕ່າງໆ; a) ການລາຍງານ ແລະ b) ສະຫຼຸບລົງເວັບໄຊ ຂອງ MPWT.